ຜູ້ແທນປະຊາຊົນ
PHOUTHEN PASAXON

21-24 ມີນາ 2022
ປີທີ 11
ສະບັບທີ 829

ສຽງຂອງສະພາແຫ່ງຊາດ

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ເນີນທາດຫຼວງ ຕູ້ ປ.ນ 662 ໂທລະສັບ ແລະ ໂທລະສານ: 413522, 454563 Email: phouthen.na@gmail.com

ປະທານສະພາແຫ່ງຊາດ ຕິດຕາມກວດກາ ບັນດາໂຄງການລົງທຶນຢູ່ເຂດເສດຖະກິດກວມລວມໄຊເສດຖາ

(ສພຊ) ວັນທີ 16 ມີນາ 2022 ທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ພ້ອມດ້ວຍຄະນະ ໄດ້ລົງເຄື່ອນໄຫວຕິດຕາມກວດກາ, ບັນດາໂຄງການລົງທຶນຢູ່ເຂດເສດຖະກິດກວມລວມໄຊເສດຖາ ນະຄອນຫລວງວຽງຈັນ (ນວ) ໂດຍການຕ້ອນຮັບຂອງທ່ານ ທະນົງໄຊ ຄຸດໄພທູນ ຫົວໜ້າຄະນະຄຸ້ມຄອງເຂດເສດຖະ

ອ່ານຕໍ່ໜ້າ 2

ຊົມເຊີຍວັນສ້າງຕັ້ງພັກປະຊາຊົນປະຕິວັດລາວ ຄົບຮອບ 67 ປີ

* "ພັກ" ນັ້ນປຸນປຽບໄດ້
ເປັນດັ່ງທວນໄຟເຍືອງແຍງ
ປຽບດາວ-ເດືອນບົນຟ້າ
ນຳພາພົງພີນ້ອງ

ນະທີໃຫຍ່ໃສເຢັນ
ສ່ອງທາງເດີນກ້າວ
ນະພາແສງໃສສ່ອງ
ຈະເລີນກ້າວພັດທະນາ ຊອບແລ້ວ!

* ຂໍມອບດວງດອກໄມ້
ໂຮມຮ່ວມໃຈປະຊາລາວ
ຍົກຍື່ນໄປຍັງເບື້ອງ
ສຸກສຳລານລາບລື່ນ

ມາລາກົ່ນຫອມຫວນ
ພ່ຳພອນໄຊແກ້ວ
ການນຳພັກ-ລັດ
ຍືນໝັ້ນຊົ່ວນິລັນ ທ່ານເອີຍ!

ສນສ ຍົກສູງຂີດຄວາມສາມາດ ໃຫ້ ສສຂ 2 ແຂວງພາກກາງ

ໜ້າ 3

ຄະນະມິດຕະພາບລັດຖະສະພາລາວ-ຍີ່ປຸ່ນ ພົບປະທາງໄກ

(ສພຊ) ກອງປະຊຸມພົບປະລະຫວ່າງຄະນະມິດຕະພາບລັດຖະສະພາລາວ-ຍີ່ປຸ່ນ ດ້ວຍຮູບແບບວິດີໂອທາງໄກ ໄດ້ຈັດຂຶ້ນໃນວັນທີ 16 ມີນາ 2022 ທີ່ສະພາແຫ່ງຊາດ ນະຄອນຫລວງວຽງຈັນ ເຊິ່ງຝ່າຍລາວນຳໂດຍທ່ານ ນາງ ທຸມມາລີ ວົງພະຈັນ ປະທານກຳມາທິການວັດທະນະທຳ-ສັງຄົມ, ປະທານຄະນະມິດຕະພາບລັດຖະສະພາລາວ-ຍີ່ປຸ່ນ ແລະ ຝ່າຍຍີ່ປຸ່ນ ນຳໂດຍທ່ານ ນາງ ຊິຈິຍະ

ອ່ານຕໍ່ໜ້າ 3

ປະທານ ກວສຊ ເຄື່ອນໄຫວ ເຮັດວຽກຢູ່ແຂວງສາລະວັນ

(ສພຊ) ວັນທີ 3 ມີນາ ຜ່ານມາ ທີ່ຫ້ອງປະຊຸມສະໂມສອນແຂວງສາລະວັນ ທ່ານ ສຸບັນ ສະວະບຸດ ປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ (ກວສຊ) ພ້ອມດ້ວຍຄະນະໄດ້ເຄື່ອນໄຫວເຮັດວຽກຢູ່ແຂວງສາລະວັນ ໂດຍການຕ້ອນຮັບຂອງທ່ານ ສີເຮັງ ຫອມສົມບັດ ປະທານສະພາປະຊາຊົນແຂວງ (ສພຂ) ພ້ອມດ້ວຍຄະນະເລຂາທິການ ແລະ ພະນັກງານ-ລັດຖະກອນພາຍໃນ ສພຂ.

ໃນການເຄື່ອນໄຫວຄັ້ງນີ້, ໄດ້ຮັບຟັງບົດລາຍງານກ່ຽວກັບຜົນສຳເລັດການເຄື່ອນໄຫວວຽກງານໂດຍຫຍໍ້ໃນໄລຍະຜ່ານມາ ຂອງ ສພຂ; ຈາກນັ້ນ, ທ່ານ ສຸບັນ ສະວະບຸດ ໄດ້ໂອ້ລົມຕໍ່ທີ່ປະຊຸມ ເຊິ່ງທ່ານໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຜົນສຳເລັດຂອງ ສພຂ ໃນການຈັດຕັ້ງປະຕິບັດພາລະບົດບາດຂອງຕົນ, ການເຄື່ອນໄຫວພົບປະກັບປະຊາຊົນ, ແລະ ວຽກງານປົ່ນອ້ອມ

ອ່ານຕໍ່ໜ້າ 2

ຍົກສູງຄຸນນະພາບດ້ານເນື້ອໃນ, ບໍລິຫານ ແລະ ປະສານງານ ໃຫ້ເລຂາການນຳຂອງສະພາແຫ່ງຊາດ

(ສພຊ) ໂດຍໄດ້ຮັບການສະໜັບສະໜູນຈາກມູນນິທິເອເຊຍ (The Asia Foundation), ໃນລະຫວ່າງວັນທີ 19-20 ມີນາ 2022 ທີ່ເມືອງວັງວຽງ ແຂວງວຽງຈັນ ໄດ້ມີກອງປະຊຸມສຳມະນາເພື່ອຍົກສູງຄຸນນະພາບດ້ານເນື້ອໃນ, ບໍລິຫານ ແລະ ປະສານງານ ໃຫ້ແກ່

ອ່ານຕໍ່ໜ້າ 3

ທ່ານເລຂາທິການ ສພຊ ເຄື່ອນໄຫວເຮັດວຽກຢູ່ 2 ແຂວງພາກໃຕ້

(ສພຊ) ວັນທີ 16 ມີນາ 2022, ທີ່ສະໂມສອນຂອງສະພາປະຊາຊົນແຂວງ (ສພຂ) ເຊກອງ ທ່ານ ນາງ ປົ່ງຄຳ ລາຊະສີມມາ ເລຂາທິການສະພາແຫ່ງຊາດ ພ້ອມດ້ວຍຄະນະກົມ, ຄະນະພະແນກ ແລະ ພະນັກງານວິຊາການຈຳນວນໜຶ່ງ ໄດ້ເຄື່ອນໄຫວຕິດຕາມຊຸກຍູ້ ແລະ ເກັບ

ອ່ານຕໍ່ໜ້າ 2

ປະທານ...

ກິດພິເສດນະຄອນຫລວງວຽງຈັນ, ມີຫົວໜ້າພະແນກການ ຕະຫລອດຮອດພະນັກງານວິຊາການ ແລະ ພາກສ່ວນກ່ຽວຂ້ອງເຂົ້າຮ່ວມ.

ການລົງຢ້ຽມຢາມຄັ້ງນີ້, ທ່ານ ຂຽງຄຳ ພຸດຈັນທະວົງສາ ຮອງອຳນວຍການບໍລິສັດຮ່ວມທຶນລາວ-ຈີນ ໄດ້ລາຍງານສະພາບການພັດທະນາໂດຍສັງເຂບ ແລະ ສະພາບການພົ້ນເດັ່ນໃນການພັດທະນາເສດຖະກິດພິເສດ ນະຄອນຫລວງວຽງຈັນ ປີ 2021 ແລະ 3 ເດືອນຕົ້ນປີ 2022, ຂໍ້ຄົງຄ້າງ ແລະ ຂໍ້ສະເໜີ, ການຈັດຕັ້ງປະຕິບັດມາດຕະການປ້ອງກັນ, ຄວບຄຸມ ແລະ ແກ້ໄຂການແຜ່ລະບາດຂອງພະຍາດໂຄວິດ-19 ເຊິ່ງໄດ້ຍົກໃຫ້ເຫັນຜົນສຳເລັດທີ່ສາມາດນຳພາໄດ້ ໃນໄລຍະຜ່ານມາ ຢ່າງເຂັ້ມງວດດ້ວຍຄວາມເອົາໃຈໃສ່ຢ່າງຕັ້ງໜ້າ. ຈາກນັ້ນ, ຄະນະກຳມາທິການ ແລະ ພາກສ່ວນທີ່ຂ້ອງ ຍັງໄດ້ມີການແລກປ່ຽນຄຳຄິດຄຳເຫັນ, ຮ່ວມກັນປຶກສາຫາລື ໃນຫລາຍບັນຫາທີ່ເປັນພື້ນຖານອັນໜັກແໜ້ນ ໃນການພັດທະນາເສດຖະກິດພິເສດນະຄອນຫລວງວຽງຈັນ ເພື່ອເປັນການສ້າງວຽກເຮັດງານທຳ, ການຜະລິດເພື່ອສົ່ງອອກ, ການຖ່າຍທອດເຕັກໂນໂລຊີ, ການເກັບພັນທະເຂົ້າງົບປະມານ ຕາມທິດລວມຂອງ ນວ ກໍຄືລັດຖະບານ.

ໂອກາດດັ່ງກ່າວ, ທ່ານ ປະທານສະພາແຫ່ງຊາດ ໄດ້ມີຄຳເຫັນໂອ້ລົມ ໃຫ້ທິດຊີ້ນຳ ໂດຍໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຄະນະຄຸ້ມຄອງເຂດເສດຖະກິດພິເສດນະຄອນຫລວງວຽງຈັນ ທີ່ເຮັດໃຫ້ວຽກງານຫລາຍດ້ານມີການຂະຫຍາຍຕົວຜັນປ່ຽນໄປໄດ້ຢ່າງຈະແຈ້ງຕັ້ງໜ້າ ເຊິ່ງເຫັນໄດ້ວ່າມີການພັດທະນານັບມື້ນັບດີຂຶ້ນແຕ່ແນວໃດກໍຕາມ ຂໍຮຽກຮ້ອງໃຫ້ຄະນະຄຸ້ມຄອງເຂດເສດຖະກິດພິເສດນະຄອນຫລວງວຽງຈັນ ສືບຕໍ່ເອົາໃຈໃສ່ຊີ້ນຳ-ນຳພາ ໃນການຈັດຕັ້ງປະຕິບັດທຸກວຽກງານຢ່າງຮອບດ້ານ, ທັນເອົາມູນເຊື້ອທີ່ມີມາຜັນຂະຫຍາຍໃຫ້ເກີດມີປະສິດທິຜົນ ທັງເພີ່ມທະວີເອົາໃຈໃສ່ໂຄສະນາການປ້ອງກັນການແຜ່ລະບາດຂອງພະຍາດໂຄວິດ-19 ຢ່າງຕໍ່ເນື່ອງ ບໍ່ໃຫ້ຖືເບົາ, ຮັບປະກັນໄດ້ຄວາມສະຫງົບປອດໄພເປັນລະບຽບຮຽບร้อย ຕິດພັນກັບ 2 ວາລະແຫ່ງຊາດ ໃນການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ ແລະ ແກ້ໄຂບັນຫາຢາເສບຕິດໃຫ້ໄດ້ຢ່າງຂາດຕົວ. ພ້ອມນັ້ນ, ທ່ານຍັງໄດ້ເນັ້ນໜັກບັນຫາສຳຄັນຕໍ່ເຂດພັດທະນາກວມລວມໄຊເສດຖາ ດັ່ງນີ້:

1.ເຂດພັດທະນາກວມລວມໄຊເສດຖາ ເປັນໂຄງການທີ່ສ່ອງແສງໃຫ້ເຫັນການພົວພັນຮ່ວມມືທາງດ້ານເສດຖະກິດຂອງສອງລັດຖະບານ ລາວ-ຈີນ, ເປັນໂຄງການທີ່ຖືກຈັດເຂົ້າໃນຂໍ້ລິເລີ່ມ "ໜຶ່ງແນວທາງ ໜຶ່ງເສັ້ນທາງ" ເມື່ອໂຄງການລົງທຶນດັ່ງກ່າວໄດ້ຮັບການພັດທະນາຢ່າງເຕັມສ່ວນ ຈະເປັນແຫລ່ງລາຍຮັບງົບປະມານອັນສຳຄັນຂອງນະຄອນຫລວງວຽງຈັນ ກໍຄືງົບປະມານແຫ່ງລັດ ຈຶ່ງສະເໜີໃຫ້ເພີ່ມທະວີຄວາມເອົາໃຈໃສ່ການຕິດຕາມ, ຊຸກຍູ້ການພັດທະນາໂຄງການໃຫ້ມີຄວາມຄືບໜ້າ ແລະ ສຳເລັດໂດຍໄວ. ພ້ອມກັນນັ້ນ ກໍໃຫ້ເອົາໃຈໃສ່ຄົ້ນຄວ້າ, ເກັບກຳຂໍ້ມູນເນື້ອໃນຂອງສັນຍາ ຖ້າມີບັນຫາໃດບໍ່ທັນລະອຽດ, ຈະແຈ້ງ ກໍໃຫ້ພ້ອມກັນປຶກສາຫາລືເພື່ອມີຄວາມເປັນເອກະພາບໃນການປັບປຸງແກ້ໄຂ ໃຫ້ຮັບປະກັນຜົນປະ�โຫຍດລວມຂອງຊາດ ກໍຄືຜົນປະໂຫຍດຂອງຜູ້ລົງທຶນ.

2.ເຂດພັດທະນາກວມລວມໄຊເສດຖາ ເປັນໂຄງການຂະໜາດໃຫຍ່ ສາມາດຮອງຮັບໂຄງການລົງທຶນຂະແໜງຕ່າງໆ ເປັນຈຳນວນຫລາຍ, ມີຄວາມຕ້ອງການແຮງງານຈຳນວນຫລາຍ ຈຶ່ງສະເໜີໃຫ້ຊ່ວຍລັດຖະບານໃນການສ້າງວຽກເຮັດງານທຳໃຫ້ແກ່ແຮງງານຂອງປະເທດເຮົາ, ສະເໜີໃຫ້ມີການພັດທະນາວິຊາຊີບດ້ານຕ່າງໆຕາມຄວາມຕ້ອງການຂອງແຕ່ລະຫົວໜ່ວຍວິສາຫະກິດ.

3. ການພັດທະນາໂຄງການລົງທຶນຂະໜາດໃຫຍ່ ຄືກັບເຂດພັດທະນາກວມລວມໄຊເສດຖາ ຢູ່ປະເທດເຮົາກໍຍັງບໍ່ທັນຫລາຍ; ບົດຮຽນ, ປະສົບການ ໃນການສ້າງກົດໝາຍ, ນິຕິກຳ ໃຕ້ກົດໝາຍ ກໍຍັງບໍ່ທັນສູງ ເຊິ່ງເປັນສາເຫດເຮັດໃຫ້ ນິຕິກຳຈຳນວນໜຶ່ງ ອາດບໍ່ທັນຮັດກຸມ, ບໍ່ທັນສອດຄ່ອງກັບສະພາບເງື່ອນໄຂຕົວຈິງຂອງ ການພັດທະນາໂຄງການລົງທຶນຕ່າງໆ. ສະນັ້ນ, ສະເໜີໃຫ້ບັນດາທ່ານເກັບກຳ, ສັງລວມ ແລະ ສະໜອງຂໍ້ມູນໃຫ້ແກ່ຄະນະເຄື່ອນໄຫວຢ້ຽມຢາມຄັ້ງນີ້ ເພື່ອນຳໄປຄົ້ນຄວ້າ, ປະສານສົມທົບກັບພາກສ່ວນກ່ຽວຂ້ອງປັບປຸງແກ້ໄຂ ໃຫ້ມີຄວາມສອດຄ່ອງກັບການດຳເນີນທຸລະກິດຕົວຈິງ, ຮັບປະກັນຜົນປະ�โຫຍດລວມຂອງປະເທດ, ຜົນປະ�โຫຍດຂອງຜູ້ພັດທະນາ ກໍຄືຜູ້ລົງທຶນໂຄງການຕ່າງໆ.

ສຳລັບຂໍ້ສະເໜີຂອງບັນດາທ່ານ ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍ, ນິຕິກຳ ໃຕ້ກົດໝາຍ ໂດຍສະເພາະນະ�โยบายສົ່ງເສີມການລົງທຶນດ້ານຕ່າງໆນັ້ນ ເຫັນວ່າເປັນບັນຫາທີ່ຈະຕ້ອງໄດ້ຄົ້ນຄວ້າຢ່າງເລິກເຊິ່ງ, ຊອກຫາເຫດຜົນດ້ານຕ່າງໆ ເພື່ອກ້າວໄປສູ່ການປັບປຸງແກ້ໄຂ. ຕໍ່ກັບບັນຫາດັ່ງກ່າວ ຂໍມອບໃຫ້ພາກສ່ວນກ່ຽວຂ້ອງຂອງສະພາແຫ່ງຊາດ ຄົ້ນຄວ້າໃຫ້ລະອຽດເລິກເຊິ່ງ, ເບິ່ງບົດຮຽນຈາກໂຄງການອື່ນ, ບົດຮຽນຂອງປະເທດອື່ນ ໂດຍຄຳນຶງເຖິງການດຶງດູດການລົງທຶນຂອງປະເທດເຮົາເປັນຫລັກ. ພາຍຫລັງທີ່ໄດ້ຄົ້ນຄວ້າຢ່າງເລິກເຊິ່ງແລ້ວ ໃຫ້ລາຍງານຕໍ່ຄະນະປະຈຳສະພາແຫ່ງຊາດ ເພື່ອມີທິດຊີ້ນຳໃນການແກ້ໄຂ.

4.ເຂດພັດທະນາກວມລວມໄຊເສດຖາ ເປັນເຂດທີ່ຮອງຮັບການລົງທຶນເປັນຈຳນວນຫລາຍ ແລະ ມີນັກລົງທຶນ, ຜູ້ຊ່ຽວຊານທີ່ມາຈາກຫລາຍປະເທດ ຈຶ່ງສະເໜີໃຫ້ເອົາໃຈໃສ່ວຽກງານປ້ອງກັນຄວາມສະຫງົບ ແນໃສ່ສະກັດກັ້ນກຸ່ມຄົນບໍ່ດີສວຍໃຊ້ການລົງທຶນທີ່ແອບແฝງເຄື່ອນໄຫວ ໃນທາງທີ່ບໍ່ຖືກຕ້ອງຕາມກົດໝາຍ ເປັນຕົ້ນອາດສະຍາກຳປະເພດຕ່າງໆ ຈຶ່ງສະເໜີໃຫ້ເອົາໃຈໃສ່ຈັດຕັ້ງຜັນຂະຫຍາຍວຽກງານປ້ອງກັນຄວາມສະຫງົບໃຫ້ມີຄວາມໜັກແໜ້ນ, ເຂັ້ມແຂງ, ສາມາດແກ້ໄຂສະພາບການໄດ້ທັນເວລາ.

5. ການປະຕິບັດພັນທະເຂົ້າງົບປະມານຂອງລັດ, ການປະກອບສ່ວນທຶນຮອນເຂົ້າໃນການພັດທະນາທ້ອງຖິ່ນ, ການປົກປັກຮັກສາສິ່ງແວດລ້ອມ ກໍເປັນວຽກງານໜຶ່ງທີ່ສຳຄັນ ສະເໜີໃຫ້ເອົາໃຈໃສ່ ເພື່ອເຮັດໃຫ້ພໍ່ແມ່ປະຊາຊົນຢູ່ຂອບເຂດທີ່ຕັ້ງຂອງໂຄງການ ເຫັນໄດ້ຄວາມສຳຄັນຂອງພາກທຸລະກິດ ຕໍ່ກັບການພັດທະນາທ້ອງຖິ່ນໃຫ້ມີໃບໜ້າໃໝ່, ການຊ່ວຍປັບປຸງຊີວິດການເປັນຢູ່ຂອງພໍ່ແມ່ປະຊາຊົນໃຫ້ດີຂຶ້ນ ເຊິ່ງຈະເປັນການດຶງດູດໃຫ້ພໍ່ແມ່ປະຊາຊົນ ປະກອບສ່ວນເຂົ້າໃນການພັດທະນາໂຄງການ ໃຫ້ມີບັນຍາກາດທີ່ດີ ແລະ ມີຄວາມຍືນຍົງ.

ຈາກນັ້ນ, ທ່ານປະທານສະພາແຫ່ງຊາດ ພ້ອມດ້ວຍຄະນະ ຍັງໄດ້ລົງຢ້ຽມຢາມຕົວຈິງຢູ່ບໍລິສັດເປັ້ເຕີເຄື່ອງນຸ່ງຫົ່ມ (ລາວ) ຈຳກັດ ແລະ ບໍລິສັດ ເປໂຕເຄມີ ລາວຈຳກັດ ຕື່ມອີກ.

(ອານຸສອນ ພູມມີທອນ)

ປະທານ ກວສຊ...

ຂອງ ສພຂ ທີ່ເຫັນວ່າມີຜົນສຳເລັດຫລາຍດ້ານ; ພ້ອມນັ້ນ, ທ່ານຍັງໄດ້ເນັ້ນໜັກໃຫ້ພະນັກງານ-ລັດຖະກອນພາຍໃນ ສພຂ ຈົ່ງພ້ອມກັນຍົກສູງຄວາມຮັບຜິດຊອບໃນການຄົ້ນຄວ້າຊອກຮູ້ຮ່ຳຮຽນກ່ຽວກັບແນວທາງນະ�โยบายຂອງພັກ, ມະຕິຄຳສັ່ງຕ່າງໆ, ກົດໝາຍ ແລະ ນິຕິກຳ ໃຕ້ກົດໝາຍ ທັງສືບຕໍ່ປັບປຸງກົນໄກແບບແผນວິທີເຮັດວຽກ ທັງອັນລວມ ແລະ ອັນສະເພາະ, ມີກົນໄກການປະສານງານຮ່ວມກັບພາກສ່ວນກ່ຽວຂ້ອງ ເພື່ອຍົກສູງຂີດຄວາມສາມາດໃນການເປັນເສນາທິການໃຫ້ແກ່ ສພຂ, ຄະນະປະຈຳ ສພຂ, ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງຕາມທີ່ກົດໝາຍໄດ້ກຳນົດໄວ້.

ໂອກາດດຽວກັນ, ທ່ານ ສຸບັນ ສະວະບຸດ ຍັງໄດ້ມອບອຸປະກອນກີລາ ມູນຄ່າ 5 ລ້ານກว่ากิบ ໃຫ້ແກ່ ສພຂ ເພື່ອນຳໄປມອບຕໍ່ໃຫ້ແກ່ບັນດາເມືອງ ໃນວາລະການເຄື່ອນໄຫວເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງ ຊຸດທີ II.

(ນາງ ຄັດສອນ ຮຸ່ງສະຫວ່າງ)

ທ່ານເລຂາທິການ...

ກຳຂໍ້ມູນ ກ່ຽວກັບການເຄື່ອນໄຫວວຽກງານຂອງຄະນະເລຂາທິການ ສພຂ ເຊກອງ ໂດຍການຕ້ອນຮັບ ແລະ ເຂົ້າຮ່ວມເຮັດວຽກຂອງທ່ານ ນາງ ຄຳເສັງ ທຸມມະວົງສາ ຮອງປະທານສະພາປະຊາຊົນແຂວງ; ມີບັນດາທ່ານຄະນະປະຈຳສະພາປະຊາຊົນແຂວງ, ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນແຂວງ, ຄະນະເລຂາທິການສະພາປະຊາຊົນແຂວງ, ປະທານ-ຮອງປະທານ 3 ກຳມະການ, ຫົວໜ້າ-ຮອງຫົວໜ້າຂະແໜງ ພ້ອມດ້ວຍພະນັກງານ-ລັດຖະກອນສະພາປະຊາຊົນແຂວງເຂົ້າຮ່ວມ.

ໃນການເຄື່ອນໄຫວຄັ້ງນີ້, ຜູ້ເຂົ້າຮ່ວມໄດ້ຮັບຟັງການລາຍງານກ່ຽວກັບສະພາບການຈັດຕັ້ງປະຕິບັດວຽກງານຂອງຄະນະເລຂາທິການ ສພຂ ເຊກອງ ໃນໄລຍະຜ່ານມາ ຈາກທ່ານ ນາງ ຄຳໄພ ວິລະສານ ເລຂາທິການ ສພຂ ເຊິ່ງໄດ້ຍົກໃຫ້ເຫັນສະພາບລວມ ແລະ ຈຸດພິເສດ, ບັນດາຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກ ໃນການເປັນເສນາທິການໃຫ້ແກ່ ສພຂ ເປັນຕົ້ນວຽກງານເນື້ອໃນ, ວຽກງານຈັດຕັ້ງ-ພະນັກງານ, ວຽກງານກວດກາ, ວຽກງານຄຸ້ມຄອງຫ້ອງການ, ວຽກງານບໍລິຫານ-ການເງິນ, ວຽກງານສື່ມວນຊົນ ແລະ ວຽກງານອື່ນໆທີ່ປຶ່ນອ້ອມ; ຈາກນັ້ນ, ຜູ້ເຂົ້າຮ່ວມຍັງໄດ້ມີການສົນທະນາແລກປ່ຽນຖອດຖອນບົດຮຽນເຊິ່ງກັນແລະກັນຢ່າງມີຈຸດສຸມ.

ວັນຕໍ່ມາວັນທີ 17 ມີນາ 2022, ທີ່ຫ້ອງປະຊຸມສະໂມສອນແຂວງສາລະວັນ ທ່ານ ນາງ ປິ່ງຄຳ ລາຊະສີມມາ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຕິດຕາມຊຸກຍູ້ ແລະ ເກັບກຳຂໍ້ມູນ ການເຄື່ອນໄຫວວຽກງານຂອງຄະນະເລຂາທິການສະພາປະຊາຊົນຂັ້ນແຂວງ (ຄລສຂ); ໂດຍຕ້ອນຮັບ ແລະ ຮ່ວມເຮັດວຽກຂອງທ່ານ ສີເຮັງ ຫອມສົມບັດ ປະທານສະພາປະຊາຊົນແຂວງ (ສພຂ); ມີຄະນະປະທານ ສພຂ, ຄະນະປະຈຳ, ຄະນະກຳມະການ, ຄະນະເລຂາທິການ ຕະຫລອດຮອດພະນັກງານ-ລັດຖະກອນ ພາຍໃນ ສພຂ ເຂົ້າຮ່ວມ.

ໃນທີ່ປະຊຸມ, ທ່ານ ສົມພອນ ແສງສຸລິຈັນ ເລຂາທິການ ສພຂ ໄດ້ຂຶ້ນລາຍງານກ່ຽວກັບສະພາບລວມຂອງການຈັດຕັ້ງປະຕິບັດວຽກງານໃນໄລຍະຜ່ານມາ ກໍຄືການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ໃນການເປັນເສນາທິການຮອບດ້ານໃຫ້ແກ່ ສພຂ, ຄະນະປະຈຳ ສພຂ ແລະ ບັນດາຄະນະກຳມະການ ກໍຄືບັນດາສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງ, ສະມາຊິກສະພາປະຊາຊົນແຂວງ (ສສຂ) ແລະ ວຽກງານອື່ນໆ ເຊິ່ງສາມາດເຫັນໄດ້ຜົນສຳເລັດໃນຫລາຍດ້ານ ເປັນສ່ວນຫລາຍ ແລະ ມີບາງບັນຫາຂໍ້ຫຍຸ້ງຍາກບາງດ້ານ ທີ່ຄລສຂ ຈະຕ້ອງໄດ້ເພີ່ມທະວີຄວາມສາມາດໃນການຈັດຕັ້ງປະຕິບັດວຽກງານ ໃຫ້ມີຜົນສຳເລັດຕາມແຜນວຽກທີ່ຈະສືບຕໍ່ໃນຕໍ່ໜ້າ; ຈາກນັ້ນ, ຜູ້ເຂົ້າຮ່ວມ ຍັງໄດ້ມີການສົນທະນາແລກປ່ຽນບົດຮຽນເຊິ່ງກັນແລະກັນ ຢ່າງເລິກເຊິ່ງ ໃສ່ຂອດກົນໄກການປະສານງານລະຫວ່າງຄະນະເລຂາທິການສະພາແຫ່ງຊາດກັບ ຄລສຂ ຂັ້ນທ້ອງຖິ່ນ ເປັນຕົ້ນ ວຽກງານປັບປຸງກົງຈັກການຈັດຕັ້ງກຳນົດພະນັກງານນຳພາຄຸ້ມຄອງ, ວຽກງານຍົກສູງຂີດຄວາມສາມາດ ແລະ ວຽກງານໂຄງການ ແຜນກໍ່ສ້າງຕຶກອາຄານຫລັງໃໝ່ ແລະ ວຽກງານປຶ່ນອ້ອມຈຳນວນໜຶ່ງ, ທັງນີ້ເພື່ອແນໃສ່ປັບປຸງ ແລະ ຊຸກຍູ້ແກ້ໄຂບາງຂໍ້ຄົງຄ້າງ, ບາງວຽກງານ ໃຫ້ມີຄວາມສອດຄ່ອງກົມກຽວກັນຍິ່ງຂຶ້ນ.

ຕອນທ້າຍ, ທ່ານ ນາງ ປິ່ງຄຳ ລາຊະສີມມາ ໄດ້ເນັ້ນໃນທີ່ປະຊຸມວ່າ: ເພື່ອເຮັດໃຫ້ວຽກງານເປັນເສນາທິການ ໃຫ້ແກ່ ສພຂ, ຄະນະປະຈຳ ສພຂ ແລະ ບັນດາຄະນະກຳມະການ, ສສຊ, ສສຂ ຕ້ອງເພີ່ມທະວີການຊີ້ນຳ-ນຳພາ ຈັດຕັ້ງປະຕິບັດໜ້າທີ່ຂອງຕົນ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ ທີ່ກຳນົດໄວ້ໃນກົດໝາຍ ໃຫ້ມີຜົນສຳເລັດ ພ້ອມທັງສ້າງຄວາມເຂັ້ມແຂງພາຍໃນ ຄລສຂ ແລະ ຂະແໜງທີ່ຂຶ້ນກັບ ຄລສຂ ຮອງຮັບ ໃຫ້ແກ່ບັນດາ ວຽກງານ ໃນຕໍ່ໜ້າ.

ພ້ອມນັ້ນ, ທ່ານ ນາງ ປິ່ງຄຳ ລາຊະສີມມາ ພ້ອມດ້ວຍ ຄະນະ ຍັງໄດ້ເຂົ້າພົບທ່ານ ໂພ ໄຊ ໄຊຍະສອນ ເຈົ້າແຂວງສາ ລະວັນ ເພື່ອລາຍງານຈຸດປະສົງ ຂອງການມາເຄື່ອນໄຫວເຮັດ ວຽກຢູ່ທີ່ແຂວງສາລະວັນ ພ້ອມ ທັງປຶກສາຫາລືແລກປ່ຽນບາງ ວຽກງານທີ່ຕິດພັນກັບວຽກງານ ສພຊ ແລະ ສພຂ.

(ນາລີວັນ ແລະ ດີລຳພົນ ພົມມະຈັນ)

ສນສ...

(ສພຊ) ເພື່ອຍົກລະດັບຄວາມຮັບຮູ້ກ່ຽວກັບພາລະບົດບາດຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງ (ສພຊ) ໃຫ້ແກ່ສະມາຊິກສະພາປະຊາຊົນຂັ້ນແຂວງ (ສສຊ) ແນໃສ່ເຮັດໃຫ້ສາມາດປະຕິບັດໜ້າທີ່ການເມືອງຂອງ ສສຊ ທັງເຮັດໃຫ້ ສສຊ ມີຄວາມຮັບຮູ້, ເຂົ້າໃຈ ແລະ ສາມາດນຳໄປຈັດຕັ້ງປະຕິບັດ ກ່ຽວກັບການສ້າງນິຕິກຳ, ການແກ້ໄຂຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນ ແລະ ທັກສະດ້ານຕ່າງໆ ຕາມພາລະບົດບາດ. ໃນລະຫວ່າງວັນທີ 17-18 ມີນາ 2022 ທີ່ເມືອງທ່າແຂກ ແຂວງຄຳມ່ວນ ສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ (ສນສ) ໄດ້ເປີດກອງປະຊຸມເຝິກອົບຮົມການຍົກສູງຂີດຄວາມສາມາດໃຫ້ແກ່ ສສຊ 2 ແຂວງຄື: ຄຳມ່ວນ ແລະ ສະຫວັນນະເຂດ ໂດຍການເປັນປະທານຂອງທ່ານ ປອ. ນາງ ສຸນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ, ເຂົ້າຮ່ວມມີທ່ານ ສົມພັນ ແພງຄຳມີ ອະດີດຮອງປະທານສະພາແຫ່ງຊາດ ຊຸດທີ VIII, ມີປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ, ປະທານກຳມາທິການຍຸຕິທຳ, ຫົວໜ້າ-ຮອງສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ, ຮອງເລຂາທິການສະພາແຫ່ງຊາດ, ສສຊ 2 ແຂວງ ແລະ ພາກສ່ວນກ່ຽວຂ້ອງເຂົ້າຮ່ວມ.

ໂອກາດນີ້, ທ່ານ ປອ. ນາງ ສຸນທອນ ໄຊຍະຈັກ ໄດ້ມີຄຳເຫັນກ່າວເປີດກອງປະຊຸມວ່າ: ການຍົກສູງຂີດຄວາມສາມາດໃຫ້ແກ່ ສສຊ ຄັ້ງນີ້ ແມ່ນການສືບຕໍ່ປະຕິບັດຕາມແຜນການເພື່ອເຮັດໃຫ້ ສສຊ ຜູ້ໃໝ່ ທີ່ມາຈາກຫລາຍສາຂາອາຊີບທີ່ແຕກຕ່າງກັນ ໄດ້ມີໂອກາດເຊື່ອມຊຶມ, ມີຄວາມຮັບຮູ້, ເຂົ້າໃຈ ແລະ ກຳແໜ້ນເນື້ອໃນບັນຫາທີ່ຈຳເປັນ ໃນການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ກໍຄືຂອງສະພາປະຊາຊົນຂັ້ນແຂວງ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ; ພ້ອມນັ້ນ, ທ່ານ ຍັງໄດ້ຮຽກຮ້ອງບັນດາທ່ານຜູ້ເຂົ້າຮ່ວມກອງປະຊຸມ ຈົ່ງໄດ້ເຊີດຊູຄວາມຮັບຜິດຊອບສູງໃນການເຊື່ອມຊຶມ, ຮຽນຮູ້, ກຳແໜ້ນບົດຮຽນທີ່ດີ ທີ່ໄດ້ສະເໜີຕໍ່ກອງປະຊຸມ ພ້ອມທັງເອົາໃຈໃສ່ແລກປ່ຽນຄຳຄິດເຫັນ ໃຫ້ມີເນື້ອໃນເລິກເຊິ່ງ ແລະ ເປັນປະໂຫຍດ ເຮັດໃຫ້ກອງປະຊຸມເຝິກອົບຮົມຄັ້ງນີ້ບັນລຸຜົນສຳເລັດຕາມຈຸດປະສົງ ແລະ ລະດັບຄາດໝາຍທີ່ວາງໄວ້.

ໃນກອງປະຊຸມ, ນັກສຳມະນາກອນໄດ້ຮັບຟັງກ່ຽວກັບພາລະບົດບາດ, ສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ; ບົດຮຽນການສ້າງນິຕິກຳໃຕ້ກົດໝາຍຂັ້ນທ້ອງຖິ່ນ, ບົດຮຽນວຽກງານການແກ້ໄຂຄຳຮ້ອງຂໍຄວາມເປັນທຳຂອງພົນລະເມືອງ, ທັກສະການຊັກຖາມ ແລະ ການປະກອບຄຳເຫັນ ເຊິ່ງສະເໜີໂດຍບັນດາວິທະຍາກອນທີ່ມີປະສົບການຕົວຈິງ ເປັນຕົ້ນແມ່ນອະດີດການນຳຂອງສະພາແຫ່ງຊາດ ຊຸດທີ VIII, ປະທານກຳມາທິການ ແລະ ຄະນະກົມທີ່ກ່ຽວຂ້ອງ; ພ້ອມດຽວກັນນັ້ນ, ບັນດາຜູ້ເຂົ້າຮ່ວມໄດ້ມີການສົນທະນາແລກປ່ຽນບົດຮຽນເຊິ່ງກັນແລະກັນ, ພ້ອມກັນປະກອບຄຳຄິດຄຳເຫັນໃນບັນຫາຕ່າງໆ ທີ່ວິທະຍາກອນນຳມາສະເໜີ ໃຫ້ມີຄວາມເຂົ້າໃຈຢ່າງເລິກເຊິ່ງ.

ກອງປະຊຸມດັ່ງກ່າວ, ແມ່ນໄດ້ຮັບການສະໜັບສະໜູນໂດຍແຜນງານການມີສ່ວນຮ່ວມຂອງປະຊາຊົນຕໍ່ວຽກງານການປົກຄອງທີ່ດີ ແລະ ການສ້າງລັດທີ່ປົກຄອງດ້ວຍກົດໝາຍ (ແຜນງານເຊກາ) ແລະ ງົບປະມານຈາກຄະນະເລຂາທິການສະພາແຫ່ງຊາດ.

(ນາງ ກຸກກົກ ບຸດດາໄຊ)

ຄະນະ...

ສົນນາໂກະ ປະທານຄະນະມິດຕະພາບລັດຖະສະພາ ຍີ່ປຸ່ນ-ລາວ ເຂົ້າຮ່ວມມີສະມາຊິກສະພາແຫ່ງຊາດທີ່ສັງກັດໃນຄະນະມິດຕະພາບດັ່ງກ່າວຈາກທັງສອງຝ່າຍ.

ທັງນີ້ ກໍເພື່ອເປັນການປະກອບສ່ວນເສີມຂະຫຍາຍສາຍພົວພັນຮ່ວມມືທີ່ເປັນຄູ່ຮ່ວມຍຸດທະສາດ ລະຫວ່າງສອງສະພາແຫ່ງຊາດລາວ-ຍີ່ປຸ່ນ ກໍຄື ລະຫວ່າງປະຊາຊົນສອງຊາດໄດ້ຮັບການພັດທະນາຢ່າງບໍ່ຢຸດຢັ້ງ ແລະ ເພື່ອຊຸກຍູ້ສົ່ງເສີມ ແລະ ເປັນຂົວຕໍ່ເສີມສ້າງສາຍພົວພັນ ແລະ ການຮ່ວມມືຂອງສອງສະພາແຫ່ງຊາດ ກໍຄືຄະນະມິດຕະພາບລັດຖະສະພາ ລາວ-ຍີ່ປຸ່ນ, ຍີ່ປຸ່ນ-ລາວ ໃຫ້ເຂົ້າສູ່ລວງເລິກ ແລະ ເຂັ້ມແຂງກວ່າເກົ່າ.

ການພົບປະຄັ້ງນີ້, ທັງສອງຝ່າຍໄດ້ສະຫລຸບຕີລາຄາຄືນການພົວພັນຮ່ວມມືລະຫວ່າງຄະນະມິດຕະພາບລັດຖະສະພາ ລາວ-ຍີ່ປຸ່ນ, ຍີ່ປຸ່ນ-ລາວ ໃນໄລຍະຜ່ານມາ ແລະ ປຶກສາຫາລືທິດທາງແຜນການຮ່ວມມືກັນໃນຕໍ່ໜ້າ; ປຶກສາຫາລືກ່ຽວກັບສະພາບການທີ່ພົ້ນເດັ່ນຂອງສອງປະເທດລາວ-ຍີ່ປຸ່ນ ເປັນຕົ້ນ: ການແກ້ໄຂລະພາບການແຜ່ລະບາດຂອງເຊື້ອພະຍາດໂຄວິດ-19; ຊຸກຍູ້ການພົວພັນຮ່ວມມືລະຫວ່າງ ຄະນະມິດຕະພາບລັດຖະສະພາ ລາວ-ຍີ່ປຸ່ນ, ຍີ່ປຸ່ນ-ລາວ ແລະ ຂົນຂວາຍການຊ່ວຍເຫລືອໃຫ້ແກ່ສະພາແຫ່ງຊາດ ລາວ.

ທ່ານ ນາງ ທຸມມາລີ ວົງພະຈັນ ໄດ້ມີຄຳເຫັນແລກປ່ຽນຕໍ່ການພົບປະຄັ້ງນີ້ວ່າ: ມີຄວາມພາກພູມໃຈເປັນຢ່າງຍິ່ງ ທີ່ເຫັນວ່າການພົວພັນຮ່ວມມືລະຫວ່າງສອງປະເທດ, ສອງອົງການນິຕິບັນຍັດ ກໍຄື ຄະນະມິດຕະພາບພວກເຮົາໃນໄລຍະຜ່ານມາ ໄດ້ຮັບການເສີມຂະຫຍາຍຢ່າງບໍ່ຢຸດຢັ້ງ; ການແລກປ່ຽນລະຫວ່າງປະຊາຊົນ ແລະ ວັດທະນະທຳລະຫວ່າງສອງຊາດ ກໍໄດ້ຮັບການເສີມຂະຫຍາຍ ແລະ ຖ່າຍທອດໃຫ້ຄົນຮຸ່ນໜຸ່ມໄດ້ຮັບຮູ້ເຂົ້າໃຈ, ການພົວພັນຮ່ວມມືອັນດີງາມທີ່ເປັນມູນເຊື້ອຂອງສອງປະເທດພວກເຮົານັບມື້ນັບຫລາຍຂຶ້ນ.

ພ້ອມກັນນັ້ນ, ທ່ານຍັງໄດ້ສະເໜີມາຍັງທ່ານ ນາງ ຊິຈິຍະ ສົນນາໂກະ ພ້ອມດ້ວຍຄະນະມິດຕະພາບລັດຖະສະພາ ຍີ່ປຸ່ນ-ລາວ ໃສ່ສືບຕໍ່ແລກປ່ຽນການຢ້ຽມຢາມ ແລະ ໄປມາຫາສູ່ນຳກັນໃຫ້ເປັນປົກກະຕິ; ສະເໜີມາຍັງຄະນະມິດຕະພາບ ລັດຖະສະພາ ຍີ່ປຸ່ນ ກໍຄືລັດຖະບານ ຍີ່ປຸ່ນ ຊ່ວຍສະໜັບສະໜູນສະພາແຫ່ງຊາດ ລາວ ໃນການເປັນເຈົ້າພາບຈັດກອງປະຊຸມສະມັດຊາລັດຖະສະພາ ລະຫວ່າງຊາດ ອາຊຽນ (AIPA) ໃນປີ 2024 ແລະ ກອງປະຊຸມ ລັດຖະສະພາ ສາກົນ ປາ ອ້ອ ອື່ນໆ; ສືບຕໍ່ຊ່ວຍ ສ້າງ ຊັບພະຍາກອນ ມະນຸດ ເພື່ອ ຍົກ ສູງ ຂີ ດ ຄ ວ າ ມ ສ າ ມ າ ດ ໃ ຫ້ ແ ກ່ ພ ະ ນັ ກ ງ ານ-ລັ ດ ຖ ະ ກ ອ ນ ຂ ອ ງ ສ ະ ພ າ ແ ຫ່ ງ ຊ າ ດ ລ າ ວ.

(ກົງທະນູຄຳ ພິພັດເສລີ)

ຍົກສູງ...

ເລຂາການນຳຂອງສະພາແຫ່ງຊາດ ໂດຍການເປັນປະທານຂອງທ່ານ ນາງ ປິ່ງຄຳ ລາສະສິມມາ ເລຂາທິການສະພາແຫ່ງຊາດ; ເຂົ້າຮ່ວມມີປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ, ວິທະຍາກອນ ຜູ້ມີຊົງຄຸນວຸດທິ, ບັນດາທ່ານ ຮອງເລຂາທິການສະພາແຫ່ງຊາດ, ເລຂາຂອງຄະນະປະຈຳສະພາແຫ່ງຊາດ, ເລຂາຮອງປະທານກຳມາທິການ, ເລຂາຮອງ ເລຂາທິການສະພາແຫ່ງຊາດ ແລະ ພາກສ່ວນກ່ຽວຂ້ອງເຂົ້າຮ່ວມຢ່າງພ້ອມພຽງ.

ທັງນີ້, ກໍເພື່ອເຮັດໃຫ້ພະນັກງານທີ່ປະຕິບັດໜ້າທີ່ເປັນ ເລຂາການນຳໄດ້ມີຄວາມຮູ້, ທັກສະ, ຄວາມສາມາດ, ເສີມ ສ້າ ງ ບຸ ກ ຄະ ລິ ກ ໃນ ການ ປະ ກອ ບ ສ່ ວ ນ ເ ຮັ ດ ໜ້ າ ທີ່ ກ ຽ ມ ພ້ ອ ມ, ປ ະ ຕິ ບ ັ ດ ໜ້ າ ວ ຽ ກ ງ ານ ທີ່ ກ ່ ຽ ວ ຂ ອ ງ ຕົ ນ ໃ ຫ້ ສ ົ ມ ບ ູ ນ ໃ ນ ການ ກ ະ ກ ຽ ມ ແ ລ ະ ຕ ອ ບ ສ ະ ໜ ອ ງ ວ ຽ ກ ງ ານ ໃ ນ ການ ປ ະ ຕ ິ ບ ັ ດ ໜ ້ າ ທ ີ່ ເ ລ ຂ າ ການ ນ ຳ ຂ ອ ງ ສ ະ ພ າ ແ ຫ່ ງ ຊ າ ດ ໃ ຫ້ ໄ ດ້ ຮ ັ ບ ຜ ົ ນ ດ ີ, ມ ີ ປ ະ ສ ິ ດ ທ ິ ພ າ ບ, ປ ະ ສ ິ ດ ທ ິ ຜ ົ ນ ດ ີ ຍ ິ່ ງ ຂ ຶ້ ນ ທ ັ ງ ເ ພ ື່ ອ ເ ຮ ັ ດ ໃ ຫ້ ການ ເ ປ ັ ນ ເ ສ ນ າ ທ ິ ການ ໃ ນ ວ ຽ ກ ງ ານ ກ ະ ກ ຽ ມ ແ ລ ະ ຮ ັ ບ ໃ ຊ້ ໂ ດ ຍ ສ ະ ເ ພ າ ະ ການ ເ ກ ັ ບ ກ ຳ ແ ລ ະ ສ ະ ໜ ອ ງ ຂ ໍ້ ມ ູ ນ-ຂ ່ າ ວ ສ ານ ໃ ຫ້ ແ ກ່ ການ ນ ຳ ສ ະ ພ າ ແ ຫ່ ງ ຊ າ ດ ໃ ຫ້ ມ ີ ປ ະ ສ ິ ດ ທ ິ ພ າ ບ ດ ີ ຂ ຶ້ ນ ເ ລ ື້ ອ ຍ ໆ ແ ລ ະ ສ ້ າ ງ ຄ ວ າ ມ ເ ປ ັ ນ ເ ອ ກ ະ ພ າ ບ ກ ັ ນ ໃ ນ ການ ຈ ັ ດ ຕ ັ ້ ງ ປ ະ ຕ ິ ບ ັ ດ ວ ຽ ກ ງ ານ ດ ້ ານ ຕ ່ າ ງ ໆ; ເ ພ ື່ ອ ຮ ັ ບ ຟ ັ ງ ບ ົ ດ ຮ ຽ ນ ກ ່ ຽ ວ ກ ັ ບ ການ ເ ປ ັ ນ ເ ລ ຂ າ ການ ນ ຳ, ການ ປ ະ ສ ານ ງ ານ ວ ຽ ກ ງ ານ ດ ້ ານ ຕ ່ າ ງ ໆ ກ ັ ບ ພ າ ກ ສ ່ ວ ນ ກ ່ ຽ ວ ຂ ້ ອ ງ ລ ວ ມ ທ ັ ງ ທ ັ ດ ສ ະ ນ ະ ຄ ຸ ນ ສ ົ ມ ບ ັ ດ ຂ ອ ງ ເ ລ ຂ າ ການ ນ ຳ; ເ ພ ື່ ອ ຮ ັ ບ ຟ ັ ງ ແ ລ ະ ແ ລ ກ ປ ່ ຽ ນ ຄ ຳ ຄ ິ ດ ຄ ຳ ເ ຫ ັ ນ ແ ລ ະ ສ ະ ເ ໜ ີ ວ ິ ທ ີ ການ ແ ກ້ ໄ ຂ ບ ັ ນ ຫ າ ຕ ່ າ ງ ໆ ໃ ນ ການ ປ ະ ຕ ິ ບ ັ ດ ວ ຽ ກ ງ ານ ຕ ົ ວ ຈ ິ ງ ຜ ່ າ ນ ມ າ ທ ີ່ ມ ີ ທ ັ ງ ດ ້ ານ ດ ີ, ດ ້ ານ ອ ່ ອ ນ ແ ລ ະ ຂ ໍ້ ຄ ົ ງ ຄ ້ າ ງ ທ ີ່ ພ າ ໃ ຫ້ ການ ຈ ັ ດ ຕ ັ ້ ງ ປ ະ ຕ ິ ບ ັ ດ ວ ຽ ກ ງ ານ ບ ໍ່ ທ ັ ນ ໄ ດ ້ ຮ ັ ບ ຜ ົ ນ ດ ີ ເ ທ ົ່ າ ທ ີ່ ຄ ວ ນ.

ການ ສ ຳ ມ ະ ນ າ ຄ ັ ້ ງ ນ ີ້, ຜ ູ້ ເ ຂ ົ້ າ ຮ ່ ວ ມ ໄ ດ ້ ຮ ັ ບ ຟ ັ ງ ແ ລ ະ ຮ ຽ ນ ຮ ູ ້ ກ ່ ຽ ວ ກ ັ ບ ການ ເ ຮ ັ ດ ບ ົ ດ ສ ັ ງ ລ ວ ມ ກ ອ ງ ປ ະ ຊ ຸ ມ, ການ ກ ະ ກ ຽ ມ ເ ອ ກ ະ ສ ານ ແ ລ ະ ບ ົ ດ ລ າ ຍ ງ ານ ການ ລ ົ ງ ເ ຄ ື່ ອ ນ ໄ ຫ ວ ວ ຽ ກ ງ ານ ຢ ູ່ ທ ້ ອ ງ ຖ ິ່ ນ, ຄ ວ າ ມ ຮ ູ ້ ພ ື ້ ນ ຖ ານ ດ ້ ານ ບ ຸ ກ ຄ ະ ລ ິ ກ ກ ະ ພ າ ບ ຂ ອ ງ ເ ລ ຂ າ ການ ນ ຳ ເ ຊ ັ ່ ນ ມ າ ລ ະ ຍ າ ດ ໃ ນ ການ ປ າ ກ ເ ວ ົ້ າ, ການ ນ ຸ ່ ງ ຖ ົ ມ, ການ ຕ ້ ອ ນ ຮ ັ ບ ແ ຂ ກ ທ ີ່ ມ າ ເ ຂ ົ້ າ ພ ົ ບ ການ ນ ຳ; ພ ້ ອ ມ ນ ັ ້ ນ, ຍ ັ ງ ໄ ດ ້ ຮ ັ ບ ຟ ັ ງ ການ ເ ຜ ີ ຍ ແ ຜ່ ບ ັ ນ ດ າ ນ ິ ຕ ິ ກ ຳ ຂ ອ ງ ຄ ະ ນ ະ ປ ະ ຈ ຳ ສ ະ ພ າ ແ ຫ່ ງ ຊ າ ດ ແ ລ ະ ຄ ະ ນ ະ ເ ລ ຂ າ ທ ິ ການ ສ ະ ພ າ ແ ຫ່ ງ ຊ າ ດ, ເ ຜ ີ ຍ ແ ຜ່ ຂ ໍ ້ ຕ ົ ກ ລ ົ ງ ຂ ອ ງ ຄ ະ ນ ະ ເ ລ ຂ າ ທ ິ ການ ສ ະ ພ າ ແ ຫ່ ງ ຊ າ ດ ວ່ າ ດ ້ ວ ຍ ການ ເ ຄ ື່ ອ ນ ໄ ຫ ວ ຂ ອ ງ ເ ລ ຂ າ ການ ນ ຳ ຂ ອ ງ ສ ະ ພ າ ແ ຫ່ ງ ຊ າ ດ; ນ ອ ກ ນ ັ ້ ນ, ຍ ັ ງ ໄ ດ ້ ສ ົ ນ ທ ະ ນ າ ແ ລ ກ ປ ່ ຽ ນ ຄ ຳ ຄ ິ ດ ຄ ຳ ເ ຫ ັ ນ ຢ ່ າ ງ ກ ົ ງ ໄ ປ ກ ົ ງ ມ າ ລ ະ ຫ ວ ່ າ ງ ວ ິ ທ ະ ຍ າ ກ ອ ນ ແ ລ ະ ສ ຳ ມ ະ ນ າ ກ ອ ນ ທ ັ ງ ໄ ດ ້ ແ ລ ກ ປ ່ ຽ ນ ປ ະ ສ ົ ບ ການ ລ ະ ຫ ວ ່ າ ງ ສ ຳ ມ ະ ນ າ ກ ອ ນ ດ ້ ວ ຍ ກ ັ ນ ເ ຮ ັ ດ ໃ ຫ້ ຜ ູ ້ ເ ຂ ົ້ າ ຮ ່ ວ ມ ໄ ດ ້ ເ ຂ ົ້ າ ໃ ຈ ເ ນ ື້ ອ ໃ ນ ບ ົ ດ ຮ ຽ ນ ເ ລ ິ ກ ເ ຊ ິ ່ ງ ຫ ລ າ ຍ ຂ ຶ ້ ນ.

ໂ ອ ກ າ ດ ດ ຽ ວ ກ ັ ນ ນ ີ ້, ຍ ັ ງ ໄ ດ ້ ຮ ັ ບ ຟ ັ ງ ການ ໂ ອ້ ລ ົ ມ ຈ າ ກ ປ ະ ທ ານ ກ ອ ງ ປ ະ ຊ ຸ ມ ເ ຊ ິ ່ ງ ທ ່ ານ ເ ນ ັ ້ ນ ໜ ັ ກ ຫ ລ າ ຍ ບ ັ ນ ສ ຳ ຄ ັ ນ ຕ ໍ່ ທ ີ່ ປ ະ ຊ ຸ ມ ເ ປ ັ ນ ຕ ົ ້ ນ ແ ມ່ ນ ສ ະ ເ ໜ ີ ໃ ຫ້ ບ ັ ນ ດ າ ສ ຳ ມ ະ ນ າ ກ ອ ນ ນ ຳ ເ ອ ົ າ ເ ນ ື ້ ອ ໃ ນ ຈ ິ ດ ໃ ຈ ກ ອ ງ ປ ະ ຊ ຸ ມ ຄ ັ ້ ງ ນ ີ ້ ໄ ປ ຈ ັ ດ ຕ ັ ້ ງ ຜ ັ ນ ຂ ະ ຫ ຍ າ ຍ ເ ຂ ົ້ າ ສ ູ່ ລ ວ ງ ເ ລ ິ ກ ໃ ນ ວ ຽ ກ ງ ານ ທ ີ່ ຕ ົ ນ ຮ ັ ບ ຜ ິ ດ ຊ ອ ບ ພ ້ ອ ມ ທ ັ ງ ສ ືບ ຕ ໍ່ ເ ອ ົ າ ໃ ຈ ໃ ສ່ ເ ຊ ື່ ອ ມ ຊ ຶ ມ ຄ ົ ນ ຄ ວ ້ າ ບ ັ ນ ດ າ ເ ອ ກ ະ ສ ານ, ໃ ຫ້ ການ ຮ ່ ວ ມ ມ ື ໃ ນ ການ ປ ະ ຕ ິ ບ ັ ດ ໜ ້ າ ທ ີ່ ວ ຽ ກ ງ ານ ແ ລ ະ ການ ປ ະ ສ ານ ງ ານ ດ ້ ານ ຕ ່ າ ງ ໆ ເ ພ ື່ ອ ເ ປ ັ ນ ເ ສ ນ າ ທ ິ ການ ທ ີ່ ດ ີ ແ ລ ະ ເ ຮ ັ ດ ໃ ຫ້ ວ ຽ ກ ງ ານ ມ ີ ຄ ວ າ ມ ຄ ່ ອ ງ ຕ ົ ວ ແ ລ ະ ທ ັ ນ ເ ວ ລ າ, ຮ ັ ບ ປ ະ ກ ັ ນ ໃ ຫ້ ການ ຈ ັ ດ ຕ ັ ້ ງ ປ ະ ຕ ິ ບ ັ ດ ວ ຽ ກ ງ ານ ການ ເ ປ ັ ນ ເ ສ ນ າ ທ ິ ການ ໃ ຫ້ ການ ນ ຳ ນ ັ ບ ມ ື້ ມ ີ ຄ ຸ ນ ນ ະ ພ າ ບ ສ ູ ງ ຂ ຶ ້ ນ ກ ວ ່ າ ເ ກ ົ່ າ.

(ນາງ ປາກາລັກ ພົມມີໄຊ)

ຮອງປະທານ ສພຂ ອຸດົມໄຊ ມອບເຄື່ອງຢູ່ເມືອງງາ

(ສພຊ) ວັນທີ 4 ມີນາ 2022 ທ່ານ ນາງ ຄຳພອມ ພົມມະຈັນ ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 4 ແຂວງອຸດົມໄຊ, ຮອງປະທານສະພາປະຊາຊົນແຂວງ (ສພຂ) ອຸດົມໄຊ ແລະ ທ່ານ ນາງ ມະນີຈັນ ວິໄລຈິດ ເຈົ້າເມືອງເມືອງງາ ພ້ອມດ້ວຍສະມາຊິກສະພາປະຊາຊົນແຂວງ ໄດ້ນຳເອົາໂທລະໂຄ່ງ, ຄອມພິວເຕີ, ເຂົ້າສານໜຽວ, ເຄື່ອງນຸ່ງຫົ່ມ ແລະ ອຸປະກອນການສຶກສາຈຳນວນໜຶ່ງ ໄປມອບໃຫ້ປະຊາຊົນ ບ້ານພູສູງນ້ອຍ ແລະ ໂຮງຮຽນມັດທະຍົມຕົ້ນບ້ານແກ່ວ.

ເຄື່ອງທີ່ນຳໄປມອບຄັ້ງນີ້ ປະກອບມີໂທລະໂຄ່ງ 1 ຊຸດ ມູນຄ່າ 4 ລ້ານ 2 ແສນກີບ, ເຂົ້າສານໜຽວ 200 ກິໂລ ມູນຄ່າ 1 ລ້ານ 9 ແສນກີບ ແລະ ເຄື່ອງນຸ່ງຫົ່ມຈຳນວນໜຶ່ງ ມອບໃຫ້ປະຊາຊົນບ້ານພູສູງນ້ອຍ, ຕາງໜ້າຮັບໂດຍອົງການປົກຄອງບ້ານ ພ້ອມດ້ວຍປະຊາຊົນພາຍໃນບ້ານ. ພ້ອມນັ້ນ, ວິຊາການຫ້ອງການຖະແຫລງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວເມືອງ ຍັງໄດ້ຊ່ວຍຕິດຕັ້ງໂທລະໂຄ່ງໃຫ້ປະຊາຊົນຢູ່ບ້ານພູສູງນ້ອຍຕື່ມອີກ ແລະ ມອບຄອມພິວເຕີຕັ້ງโต๊ะຈຳນວນ 1 ຊຸດ ມູນຄ່າ 4 ລ້ານ 5 ແສນກີບ ແລະ ອຸປະກອນການຮຽນຈຳນວນໜຶ່ງໃຫ້�โรงຮຽນມັດທະຍົມຕົ້ນ ບ້ານແກ່ວ, ຮັບໂດຍຕາງໜ້າຄະນະອຳນວຍການ ພ້ອມດ້ວຍນ້ອງນັກຮຽນ.

ເຄື່ອງຈຳນວນດັ່ງກ່າວ ແມ່ນໄດ້ມາຈາກການປະກອບສ່ວນຊ່ວຍເຫລືອຂອງຄອບຄົວທ່ານ ຄຳຫລ້າ ຜິວວັນນາ ເຈົ້າເມືອງເມືອງຫົງສາ, ຈາກພະແນກສາທາລະນະສຸກແຂວງ ແລະ ພາກສ່ວນອື່ນໆຈຳນວນໜຶ່ງ.

ການເຄື່ອນໄຫວຄັ້ງນີ້, ກໍເພື່ອເປັນການສະໜອງອຸປະກອນທີ່ຈຳເປັນຮັບໃຊ້ເຂົ້າໃນວຽກງານຂອງບ້ານ ແລະ ປະກອບສ່ວນເຂົ້າໃນການຮຽນ-ການສອນ ໃຫ້ມີຄວາມວ່ອງໄວ ແລະ ສະດວກສະບາຍຂຶ້ນກວ່າເກົ່າ.

(ແສງພອນ ອິນນະລິງ)

ສຳເລັດກອງປະຊຸມໃຫຍ່ ຄັ້ງທີ II ຂອງໜ່ວຍພັກຄະນະເລຂາທິການ ສພຂ ສະຫວັນນະເຂດ

(ສພຊ) ໃນຕອນເຊົ້າ ວັນທີ 9 ມີນາ 2022 ທີ່ສະພາປະຊາຊົນແຂວງ (ສພຂ) ສະຫວັນນະເຂດ ໄດ້ເປີດກອງປະຊຸມໃຫຍ່ສະມາຊິກພັກ ຄັ້ງທີ II ຂອງໜ່ວຍພັກຄະນະເລຂາທິການ ໂດຍການເຂົ້າຮ່ວມໃນພິທີຂອງສະຫາຍ ຄຳຜັນ ຄູນສະຫວັນ ຄະນະປະຈຳພັກແຂວງ, ຮອງເລຂາຄະນະພັກ ຣາກຖານ, ຮອງປະທານ ສພຂ, ສະຫາຍ ພູທອນ ພຸດທະຂັນຕີ ເລຂາໜ່ວຍພັກຄະນະເລຂາທິການ ສພຂ, ມີຕາງໜ້າຈາກຄະນະພັກຈັດຕັ້ງແຂວງ, ຄະນະພັກກວດກາແຂວງ, ຄະນະພັກຣາກຖານ, ບັນດາສະຫາຍເລຂາໜ່ວຍພັກພາຍໃນ ສພຂ ແລະ ຜູ້ແທນສົມບູນພາຍໃນໜ່ວຍພັກ ເຂົ້າຮ່ວມຢ່າງພ້ອມພຽງ.

ໃນພິທີ, ທ່ານ ພູທອນ ພຸດທະຂັນຕີ ໄດ້ກ່າວໄຂກອງປະຊຸມ ພ້ອມຜ່ານບົດລາຍງານການເມືອງ ພາກ I,II,III ແລະ ທິດທາງແຜນສູ້ຊົນໃນແຕ່ລະໜ້າວຽກເປັນຕົ້ນແມ່ນວຽກງານດ້ານການເມືອງແນວຄິດ, ແບບແຜນການນຳພາ, ການເຮັດໜ້າທີ່ເປັນເສນາທິການດ້ານເນື້ອໃນ, ວຽກງານຮອບດ້ານໃຫ້ແກ່ ສພຂ, ຄະນະປະຈຳ ສພຂ ແລະ ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 13, ວຽກງານກໍ່ສ້າງພັກ-ພະນັກງານ, ຕົລາດາດ້ານດີ, ດ້ານອ່ອນ, ຂໍ້ຄົງຄ້າງ ບົດຮຽນທີ່ຖອດຖອນໄດ້ ໃນການເຄື່ອນໄຫວຊີ້ນຳ-ນຳພາການຈັດຕັ້ງປະຕິບັດໜ້າທີ່ວຽກງານໃນໄລຍະຜ່ານມາ.

ກອງປະຊຸມໃຫຍ່ຄັ້ງນີ້, ໄດ້ປ່ອນບັດຄັດເລືອກເອົາຄະນະໜ່ວຍພັກຊຸດໃໝ່ ບົນພື້ນຖານຕາມຫລັກການລວມສູນປະຊາທິປະໄຕ, ຖືກຕ້ອງສອດຄ່ອງກັບມາດຖານເງື່ອນໄຂຕົວຈິງຕາມກົດລະບຽບພັກປະຊາຊົນ ປະຕິວັດລາວ ສະໄໝ XI ແລະ ໃນກອງປະຊຸມຄັ້ງປະຖົມມະລຶກ ໄດ້ເປັນເອກະພາບເລືອກເອົາສະຫາຍ ພູທອນ ພຸດທະຂັນຕີ ເປັນເລຂາໜ່ວຍພັກ, ສະຫາຍ ຂັນທອງ ຄົມທິລາດ ເປັນຮອງເລຂາໜ່ວຍພັກ ທັງເປັນຜູ້ກວດກາໜ່ວຍພັກ ແລະ ສະຫາຍ ບົວລົມ ອິນທິທະວົງ ເປັນກຳມະການ.

ໂອກາດດຽວກັນນີ້, ສະຫາຍ ຄຳຜັນ ຄູນສະຫວັນ ໄດ້ມີຄຳເຫັນໂອ້ລົມຕໍ່ກອງປະຊຸມ ເຊິ່ງສະຫາຍໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຜົນງານການຈັດຕັ້ງຈັດຕັ້ງປະຕິບັດວຽກງານ ໃນໄລຍະ 5 ປີຜ່ານມາ ແລະ ໄດ້ເນັ້ນໜັກໃຫ້ຄະນະພັກຊຸດໃໝ່ ໃຫ້ເຄື່ອນໄຫວຊີ້ນຳ-ນຳພາ, ເພີ່ມທະວີຄວາມສາມັກຄີເປັນເອກະພາບ ແລະ ແບບແຜນວິທີເຮັດວຽກຂອງຕົນໃຫ້ລະອຽດ; ເອົາໃຈໃສ່ສ້າງພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ, ສະມາຊິກພັກທຸກສະຫາຍ ຕ້ອງເປັນແບບຢ່າງນຳໜ້າທາງການເມືອງ-ແນວຄິດ, ແບບແຜນການນຳພາ, ວິທີເຮັດວຽກ, ແບບແຜນການດຳລົງຊີວິດ ແລະ ອື່ນໆຕື່ມອີກ.

(ນັກຂ່າວ ສພຂ ສະຫວັນນະເຂດ)

ສສຊ ເຂດ 2 ຜັນຂະຫຍາຍ ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມ ສພຊ ຊຸດທີ IX ແລະ ສພຂ ຊຸດທີ II

(ສພຊ) ວັນທີ 10 ມີນາ 2022 ທີ່ສະໂມສອນເມືອງບຸນເໜືອ ແຂວງຜົ້ງສາລີ, ທ່ານ ທອງສີ ເສົາສຸລິພົມ ປະທານສະພາປະຊາຊົນແຂວງ (ສພຂ), ປະທານຄະນະສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງ 2 ແຂວງຜົ້ງສາລີ ແລະ ທ່ານ ນາງ ຈັນມະນີ ດວງພາສຸກ ປະທານຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ, ສສຊ ປະຈຳເຂດເລືອກຕັ້ງ 2 ແຂວງ ຜົ້ງສາລີ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຜັນຂະຫຍາຍ ແລະ ໂຄສະນາເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝວິສາມັນ ເທື່ອທີ 1 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX, ກອງປະຊຸມສະໄໝສາມັນເທື່ອທີ 2 ຂອງ ສພຊ ຊຸດທີ IX ແລະ ສພຂ ຊຸດທີ II; ມີບັນດາທ່ານຄະນະປະຈຳພັກແຂວງ, ກຳມະການພັກແຂວງ, ພະແນກການ, ຫ້ອງການ, ອົງການລັດທຽບເທົ່າ, ອົງການແນວລາວສ້າງຊາດແຂວງ, ສະຫະພັນນັກຮົບເກົ່າແຂວງ, ອົງການຈັດຕັ້ງມະຫາຊົນຂັ້ນແຂວງ, ພະນັກງານ-ລັດຖະກອນ, ຕາງໜ້າກອງຮ້ອຍ 3 ທີ່ຂຶ້ນກັບກອງພັນນ້ອຍທະຫານຮາບ 19, ໂຮງຮຽນທະຫານທ້ອງຖິ່ນແຂວງ, �โรงຮຽນ, �โรงໝໍ, ຫົວໜ່ວຍທຸລະກິດ, ວິສາຫະກິດທັງພາກລັດ ແລະ ເອກະຊົນ ອ້ອມຂ້າງເທສະບານແຂວງໃໝ່ ເມືອງບຸນເໜືອ ແຂວງຜົ້ງສາລີ ເຂົ້າຮ່ວມ.

ໃນວັນທີ 11 ມີນາ 2022 ທີ່ສະໂມສອນໃຫຍ່ອົງການປົກຄອງແຂວງ ທີ່ເທສະບານເມືອງຜົ້ງສາລີ, ຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 2 ແຂວງຜົ້ງສາລີ ເຊິ່ງນຳໂດຍທ່ານ ສົມຈິດ ຫັບລະກອນ ຮອງປະທານ ສສຊ ປະຈຳເຂດເລືອກຕັ້ງທີ 2, ຮອງປະທານ ສພຂ ແລະ ທ່ານ ອູ່ຄຳ ຕຸລາພັນ ສສຊ ປະຈຳເຂດເລືອກຕັ້ງທີ 2 ໄດ້ຈັດກອງປະຊຸມພົບປະ ແລະ ຈັດຕັ້ງຜັນຂະຫຍາຍ ແລະ ໂຄສະນາເຜີຍແຜ່ເນື້ອໃນຜົນສຳເລັດກອງປະຊຸມສະໄໝວິສາມັນເທື່ອທີ 1, ກອງປະຊຸມສະໄໝສາມັນເທື່ອທີ 2 ຂອງ ສພຊ ຊຸດທີ IX ແລະ ເນື້ອຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 2 ຂອງ ສພຂ ຊຸດທີ II; ເຂົ້າຮ່ວມຮັບຟັງມີບັນດາຫົວໜ້າ-ຮອງຫົວໜ້າພະແນກການການ, ພະນັກງານ-ລັດຖະກອນ ຈາກບັນດາພະແນກການຂັ້ນແຂວງອ້ອມຂ້າງແຂວງ, ພະນັກງານຈາກບັນດາລັດວິສາຫະກິດພາຍໃນ ແລະ ເອກະຊົນຂັ້ນແຂວງ ເຂົ້າຮ່ວມທັງໝົດ 145 ທ່ານ.

ທັງນີ້, ກໍເພື່ອເປັນການຈັດຕັ້ງປະຕິບັດສິດ ແລະ ໜ້າທີ່ຂອງ ສສຊ, ສະມາຊິກສະພາປະຊາຊົນແຂວງ ຕາມທີ່ກົດໝາຍໄດ້ກຳນົດ; ເພື່ອເປັນລາຍງານການເຄື່ອນໄຫວຂອງຕົນຕໍ່ຜູ້ສົດເລືອກຕັ້ງ ແລະ ເກັບກຳຄຳຄິດຄຳສະເໜີທີ່ມີຕໍ່ການຄຸ້ມຄອງບໍລິຫານລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ທັງເປັນການຊຸກຍູ້ໃຫ້ທຸກພາກສ່ວນເຂົ້າຮ່ວມໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ ແລະ ລັດຖະທຳນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ເຂົ້າໃນການຈັດຕັ້ງປະຕິບັດວຽກງານໃນທຸກຂົງເຂດ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ໃຫ້ມີປະສິດທິພາບ, ປະສິດທິຜົນ ແລະ ສອດຄ່ອງກັບສະພາບການພັດທະນາຂອງແຂວງຜົ້ງສາລີໃນປັດຈຸບັນ.

ໃນການເຄື່ອນໄຫວ, ສສຊ ໄດ້ຜັນຂະຫຍາຍມະຕິກອງປະຊຸມສະໄໝວິສາມັນເທື່ອທີ 1 ແລະ ກອງປະຊຸມສະໄໝສາມັນເທື່ອທີ 2 ຂອງ ສພຊ ຊຸດທີ IX ເປັນຕົ້ນແມ່ນມະຕິວ່າດ້ວຍການຮັບຮອງເອົາວາລະແຫ່ງຊາດກ່ຽວກັບການແກ້ໄຂຂໍ້ຫຍຸ້ງທາງດ້ານເສດຖະກິດ-ການເງິນ ໃນໄລຍະປີ 2021-2023 ແລະ ກ່ຽວກັບການແກ້ໄຂບັນຫາຢາເສບຕິດ ໃນໄລຍະປີ 2021-2023; ມະຕິວ່າດ້ວຍການຮັບຮອງວິໄສທັດການພັດທະນາເສດຖະກິດດິຈິຕອນແຫ່ງຊາດ ໄລຍະ 20 ປີ (2021-2040), ຍຸດທະສາດການພັດທະນາເສດຖະກິດດິຈິຕອນແຫ່ງຊາດ ໄລຍະ 10 ປີ (2021-2030) ແລະ ແຜນພັດທະນາເສດຖະກິດດິຈິຕອນແຫ່ງຊາດ ໄລຍະ 5 ປີ (2021-2025) ແລະ ມະຕິອື່ນໆອີກຈຳນວນໜຶ່ງ; ໄດ້ຮັບຟັງທ່ານ ນາງ ຈັນມະນີ ດວງພາສຸກ ຜັນຂະຫຍາຍມະຕິກອງປະຊຸມສະພາປະຊາຊົນແຂວງ ເປັນຕົ້ນແມ່ນມະຕິວ່າດ້ວຍການຮັບຮອງເອົາບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານຂອງແຂວງ ປະຈຳປີ 2021 ແລະ ທິດທາງແຜນການ ປີ 2022; ມະຕິວ່າດ້ວຍການຮັບຮອງເອົາບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດ ປະຈຳປີ 2021 ແລະ ທິດທາງແຜນການ ປີ 2022 ຂອງອົງການກວດສອບແຫ່ງລັດ ປະຈຳພາກເໜືອ; ຜົນການກວດສອບບົດສະຫລຸບ ຂາດຕົວແຫ່ງລັດ ແລະ ເອກະສານລາຍງານການເງິນຂອງລັດ ວິສາຫາກິດນ້ຳປະປາແຂວງຜົ້ງສາລີ ປະຈຳປີ 2020 ແລະ ມະຕິອື່ນໆອີກຈຳນວນໜຶ່ງ.

ຄະນະຂອງທ່ານ ທອງສີ ເສົາສຸລິພົມ ແລະ ທ່ານ ນາງ ຈັນມະນີ ຍັງໄດ້ລົງໂຄສະນາ ແລະ ເຜີຍແຜ່ໃນຂົງເຂດກຳລັງປະກອບອາວຸດ ທີ່ສະໂມສອນກອງພັນທະຫານຮາບ 19 ທີ່ບ້ານຍໍ້ ເມືອງບຸນເໜືອ ແຂວງຜົ້ງສາລີ, ມີຄະນະພັກ, ຄະນະບັນຊາ ແລະ ກຳລັງພົນຈາກກອງພັນທະຫານຮາບ 19 ເຂົ້າຮ່ວມຮັບຟັງ ແລະ ຍັງໄດ້ນຳເອົາອຸປະກອນກີລາຈຳນວນໜຶ່ງ ມູນຄ່າ 1.300.000 ກີບ ໄປມອບໃຫ້ກອງພັນນ້ອຍທະຫານຮາບ 19.

ນອກນັ້ນ, ຮອງປະທານ ສສຊ ພ້ອມດ້ວຍຄະນະ ຍັງໄດ້ລົງພົບປະ ແລະ ຈັດຕັ້ງຜັນຂະຫຍາຍ ຢູ່ 2 ກຳລັງກອງລັງຄື: ກອງບັນຊາການທະຫານແຂວງ ແລະ ກອງບັນຊາການ ປກສ ແຂວງ ເຊິ່ງມີບັນດາຄະນະບັນຊາ, ບັນດານາຍ-ພົນທະຫານແຂວງ, ນາຍ-ພົນຕຳຫລວດແຂວງ ເຂົ້າຮັບຟັງທັງໝົດ 230 ທ່ານ.

ໃນການເຄື່ອນຄັ້ງດັ່ງກ່າວ, ທ່ານຍັງໄດ້ນຳເອົາຊຸດກີລາຈຳນວນ 40 ຊຸດ ເພື່ອມອບໃຫ້ 2 ບັນຊາການທະຫານແຂວງ ແລະ ກອງບັນຊາການ ປກສ ແຂວງ ເພື່ອເປັນການປະກອບສ່ວນເຂົ້າໃນການຂະບວນການແຂ່ງຂັນກີລາເປັນການຂ່ຳນັບຕ້ອນຮັບວັນສ້າງຕັ້ງກຳລັງ ປກສ ຄົບຮອບ 61 ປີ (5 ເມສາ 1961-5 ເມສາ 2022) ທີ່ຈະມາຮອດນີ້ ໃຫ້ເປັນຂະບວນການຝຶກຝົນ ແລະ ມີເນື້ອໃນ.

(ນາງ ສຸກສົມພອນ ແກ້ວແສງພະຈັນ ແລະ ສຸຫວັນ ແສງຈັນສຸກ)

ສພຊ ສາລະວັນ ສະຫລຸບຕີລາຄາການຄຸ້ມຄອງ-ການເຄື່ອນໄຫວວຽກງານສາສະໜາ

(ສພຊ) ໃນວັນທີ 9 ມີນາ 2022 ສະພາປະຊາຊົນແຂວງ (ສພຊ) ສາລະວັນ ໄດ້ເປີດກອງປະຊຸມສະຫລຸບຕີລາຄາການຄຸ້ມຄອງ-ການເຄື່ອນໄຫວວຽກງານສາສະໜາຢູ່ແຂວງສາລະວັນ ທີ່ຫ້ອງປະຊຸມ ສພຊ ສາລະວັນ ໂດຍການເຂົ້າຮ່ວມຂອງທ່ານ ສີເຮັງ ຫອມສົມບັດ ປະທານ ສພຊ, ພາຍໃຕ້ການເປັນປະທານຂອງທ່ານນາງ ທອງໃບ ໄຊຍະສານ ປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ, ມີທ່ານ ຮອງປະທານຄະນະກຳມະການ, ຕາງໜ້າອົງການພຸດສາສະໜາສຳພັນລາວແຂວງ, ກອງບັນຊາການປ້ອງກັນຄວາມສະຫງົບແຂວງ, ພະແນກພາຍໃນ, ພະແນກກະສິກຳ ແລະ ປ່າໄມ້, ແນວລາວສ້າງຊາດແຂວງ, ອົງການຈັດຕັ້ງມະຫາຊົນແຂວງ, ຕາງໜ້າສາສະໜາພຸດ, ຕາງໜ້າຄຣິດຕະຈັກຄະນະວັນເສົາ ແລະ ວັນອາທິດ, ພະນັກງານວິຊາການກ່ຽວຂ້ອງເຂົ້າຮ່ວມ.

ຜູ້ເຂົ້າຮ່ວມໄດ້ຮັບຟັງການຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຕິດພັນກັບການແກ້ໄຂປາກົດການຫຍໍ້ທໍ້ຂອງສາສະໜາ; ພາລະບົດບາດ, ສິດໜ້າທີ່ຂອງ ປກສ ແຂວງ ຕິດພັນກັບການແກ້ໄຂປາກົດການຫຍໍ້ທໍ້ຂອງສາສະໜາ; ຕີລາຄາການຄຸ້ມຄອງ-ການເຄື່ອນໄຫວວຽກງານສາສະໜາຂອງຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ; ການເຄື່ອນໄຫວວຽກງານຂອງອົງການພຸດທະສາສະໜາສຳພັນແຂວງ, ການເຄື່ອນໄຫວວຽກງານຂອງຄະນະສູນລວມຄຣິດຕະຈັກຂາວປະເສີດ ຄະນະວັນອາທິດ; ການເຄື່ອນໄຫວວຽກງານຂອງສາສະໜາເຢຊູຄຣິດຄະນະວັນເສົາ; ການລາຍງານກ່ຽວກັບການຈັດຕັ້ງເຜີຍແຜ່ດຳລັດ 315/ລບ ວ່າດ້ວຍການຄຸ້ມຄອງ ແລະ ປົກປ້ອງການເຄື່ອນໄຫວສາສະໜາ ແລະ ລາຍງານກ່ຽວກັບການຈັດຕັ້ງເຜີຍແຜ່ດຳລັດ 348/ລບ ວ່າດ້ວຍມາດຕະຖານພື້ນທຸກ ແລະມາດຕະຖານພັດທະນາ; ຈາກນັ້ນ, ຜູ້ແທນກອງປະຊຸມ ກໍໄດ້ພ້ອມກັນປະກອບຄຳຄິດຄຳເຫັນ, ຂໍ້ສະດວກ, ຂໍ້ຫຍຸ້ງຍາກຈຳນວນໜຶ່ງ ໃນການຈັດຕັ້ງປະຕິບັດວຽກງານສາສະໜາ ທັງນີ້ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານສາສະໜາຢູ່ແຂວງສາລະວັນ ຖືກຕ້ອງສອດຄ່ອງກັບກົດໝາຍ ແລະ ລະບຽບການ.

(ນາງ ຄັດສອນ ຮຸ່ງສະຫວ່າງ)

ເຄື່ອນໄຫວຕິດຕາມກວດກາ ແລະ ຊຸກຍູ້ ປະຊາຊົນທີ່ຖືກຜົນກະທົບຈາກການຂຸດຄົ້ນບໍ່ແຮ່

(ສພຊ) ລະຫວ່າງວັນທີ 7-9 ມີນາ 2022 ທ່ານ ຄຳເຜີຍ ງອນວັນຄຳ ຮອງປະທານສະພາປະຊາຊົນແຂວງ (ສພຊ) ອຸດົມໄຊ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຕິດຕາມກວດກາ ແລະ ຊຸກຍູ້ປະຊາຊົນ 5 ບ້ານ ຄື: ບ້ານຕອງ, ບ້ານ ຈອມຊ້າງນ້ຳເຢັນ, ບ້ານ ມົກແຫວນ, ບ້ານພູຫລວງ ແລະ ບ້ານງອນ ທີ່ຖືກຜົນກະທົບຈາກການຂຸດຄົ້ນແຮ່ຄຳຂອງບໍລິສັດ ລາວຊິນຫລີງອຸດສາຫະກຳບໍ່ແຮ່ ຢູ່ເມືອງປາກແບງ ແຂວງອຸດົມໄຊ.

ການເຄື່ອນໄຫວໃນຄັ້ງນີ້, ກໍເພື່ອພົບປະໂອ້ລົມ, ເກັບກຳສະພາບການ, ຮັບຟັງຄຳຄິດຄຳເຫັນ, ຄຳສະເໜີຂອງປະຊາຊົນບັນດາເຜົ່າ ທີ່ຕິດພັນກັບການຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ ແລະ ກົດໝາຍ,ແຜນພັດທະນາເສດຖະກິດ-ສັງຄົມ, ມະຕິກອງປະຊຸມສະພາແຫ່ງຊາດ, ມະຕິກອງປະຊຸມສະພາປະຊາຊົນແຂວງ ແລະ ບັນດານິຕິກຳຕ່າງໆ.

ໂອກາດດັ່ງກ່າວ, ໄດ້ຮັບຟັງການລາຍງານສະພາບລວມຂອງອົງການປົກຄອງບ້ານ 5 ບ້ານ ແລະ ຍັງຮັບຟັງຄຳສະເໜີຕ່າງໆ ກ່ຽວກັບຜົນກະທົບຈາກບໍລິສັດ ຂຸດຄົ້ນແຮ່ຄຳ. ພ້ອມນີ້, ຄະນະ ຍັງໄດ້ລົງເຂດຂຸດຄົ້ນແຮ່ຄຳ ແລະ ເຂດຈັດສັນ ປຸກສ້າງເຮືອນ 24 ຄອບຄົວ, ສະໂມສອນບ້ານ ແລະ ໂຮງໝໍນ້ອຍຂອງບໍລິສັດ ລາວ ຊິນຫລີງອຸດສາຫະກຳບໍ່ແຮ່ ແລະ ໄດ້ຮັບຟັງການລາຍງານສະພາບ ລວມການຈັດຕັ້ງປະຕິບັດໃນໄລ ຍະຜ່ານມາ ແລະ ທິດທາງແຜນ ການໃນຕໍ່ໜ້າຂອງບໍລິສັດ ເຊິ່ງ ເຫັນໄດ້ທັງຂໍ້ສະດວກ-ຂໍ້ຫຍຸ້ງ ຍາກ ແລະ ຄຳສະເໜີຕ່າງໆ.

ໂອກາດດຽວກັນນີ້, ຮອງປະທານ ສພຊ ອຸດົມໄຊ ຍັງ ໄດ້ມີຄຳເຫັນໂອ້ລົມຕໍ່ປະຊາຊົນ ແລະ ບໍລິສັດດັ່ງກ່າວ ໂດຍທ່ານ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍ ຕໍ່ການຈັດຕັ້ງປະຕິບັດວຽກງານ ໃນໄລຍະຜ່ານມາ ທີ່ສາມາດບັນ ລຸຕາມຄາດໝາຍ ແລະ ໄດ້ເນັ້ນ ໜັກຕໍ່ອົງການປົກຄອງ-ປະຊາຊົນ 5 ບ້ານ ແລະ ບໍລິສັດ ຈົ່ງເພີ່ມທະວີ ຄວາມສາມັກຄີເຊິ່ງກັນແລະກັນ, ປະສານສົມທົບກັນໃຫ້ມີຄວາມ ເຂົ້າອົກເຂົ້າໃຈກັນ ແລະ ຊ່ວຍ ກັນແກ້ໄຂບັນຫາຕ່າງໆຕາມຂັ້ນ ຕອນ, ລະບຽບການ-ຫລັກການ ແລະ ຖືກຕ້ອງຕາມກົດໝາຍ.

ຈາກນັ້ນ, ຄະນະໄດ້ເຄື່ອນ ໄຫວພົບປະໂອ້ລົມອົງການປົກ ຄອງບ້ານປາກແບງ, ບ້ານແກ້ງ ຊ້າງ ແລະ ຮັບຟັງການລາຍງານ ສະພາບລວມຂອງອົງການປົກ ຄອງເມືອງ ພ້ອມທັງໂອ້ລົມຕໍ່ພະ ນັກງານຫລັກແຫລ່ງຂັ້ນເມືອງ ເຊິ່ງຮອງປະທານ ສພຊ ໄດ້ຍົກ ໃຫ້ເຫັນສະພາບການພົ້ນເດັ່ນໃນ ໄລຍະຜ່ານມາຂອງແຂວງ ແລະ ເມືອງ. ພ້ອມນັ້ນ, ຍັງໄດ້ເນັ້ກ ໜັກບາງບັນຫາເຊັ່ນ ຈົ່ງເພີ່ມທະ ວີວຽກງານການເມືອງແນວຄິດ, ຈັດຕັ້ງປະຕິບັດຕາມມະຕິຕ່າງໆ, ປັບປຸງແກ້ໄຂວຽກງານຕ່າງໆ ທັງ ອັນຮີບດ່ວນ, ສະເພາະໜ້າ ແລະ ຍາວນານ, ເພີ່ມທະວີຄວາມສາ ມັກຄີເປັນປົກແຜ່ນ, ເອົາໃຈໃສ່ ເຫັນຄວາມສຳຄັນວຽກງານ ສພຊ ປະຈຳເມືອງ, ເອົາໃຈໃສ່ປະຕິບັດ ສອງວາລະແຫ່ງຊາດ ແລະ ສືບຕໍ່ ປະຕິບັດໜ້າທີ່ ໃຫ້ສຳເລັດ ແລະ ບັນລຸຕາມຄາດໝາຍ.

(ສີເຫວາ ສີບຸນເຮືອງ)

ກອງປະຊຸມປະກອບຄຳເຫັນໃສ່ຮ່າງກົດໝາຍ ວ່າດ້ວຍຊັບສິນແຫ່ງລັດ ສະບັບປັບປຸງທີ່ແຂວງໄຊຍະບູລີ

(ສພຊ) ໃນວັນທີ 10 ມີນາ 2022 ທ່ານ ບຸນລ້ວນ ຊົມສີຫາປັນຍາ ຮອງປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 7 ແຂວງໄຊຍະບູລີ ພ້ອມດ້ວຍບັນດາປະທານຄະນະກຳມະການ ແລະ ເລຂາທິການສະພາປະຊາຊົນແຂວງໄຊຍະບູລີ ໄດ້ເຂົ້າຮ່ວມກອງປະຊຸມປະກອບຄຳເຫັນໃສ່ຮ່າງກົດໝາຍວ່າດ້ວຍຊັບສິນແຫ່ງລັດ ສະບັບປັບປຸງ ທີ່ຫ້ອງປະຊຸມຂອງແຂວງໄຊຍະບູລີ ຈັດຂຶ້ນໂດຍກອງຄຸ້ມຄອງຊັບສິນແຫ່ງລັດ ກະຊວງການເງິນ ພາຍໃຕ້ການປະທານຮ່ວມຂອງທ່ານ ວັນດາວ ແວວທະນັດສີ ຫົວໜ້າພະແນກການເງິນແຂວງ, ທ່ານ ພຸດທະສິນ ເຮືອງທະວົງ ຫົວໜ້າກົມຄຸ້ມຄອງຊັບສິນແຫ່ງລັດ ກະຊວງການເງິນ; ມີສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ 2,3,4,5, 6,7 ແລະ 18, ມີຫົວໜ້າຮອງ ຫົວໜ້າພະແນກການທີ່ກ່ຽວຂ້ອງ, ມີຫົວໜ້າ-ຮອງຫົວໜ້າຂະແໜງ ພະແນກພາຍໃນ 9 ແຂວງ ພ້ອມ ດ້ວຍວິຊາການເຂົ້າຮ່ວມ.

ໃນທີ່ປະຊຸມ, ທ່ານ ວັນ ດາວ ແວວທະນັດສີ ໄດ້ກ່າວ ຕ້ອນຮັບ ແລະ ເປີດກອງປະຊຸມ ທາບທາມຄຳຄິດຄຳເຫັນໃສ່ຮ່າງ ກົດໝາຍວ່າດ້ວຍການປັບປຸງບາງ ມາດຕາຂອງກົດໝາຍຢ່າງເປັນ ທາງການ. ຈາກນັ້ນ, ທ່ານ ພຸດ ທະສິນ ເຮືອງທະວົງ ໄດ້ໃຫ້ຮູ້ວ່າ ວຽກງານຄຸ້ມຄອງຊັບສິນຂອງລັດ ແມ່ນວຽກງານທີ່ສຳຄັນ ແລະ ຈຳ ເປັນໃນສະພາບເງື່ອນໄຂຂອງປະ ເທດເຮົາໃນປັດຈຸບັນ; ຖ້າມີລະ ບຽບການໃນການຄຸ້ມຄອງທີ່ມີ ຄວາມຮັດກຸມ, ໂປ່ງໃສ ຊັບສິນ ຂອງລັດກໍສາມາດພັດທະນາເປັນ ແຫລ່ງລາຍຮັບທີ່ມີມູນຄ່າມະຫາ ສານ ແລະ ມີຄວາມຍືນຍົງໃນ ການປະກອບສ່ວນໃນການພັດ ທະນາ ແລະ ສ້າງສາປະເທດຊາດ ໃນອານາຄົດ. ສະນັ້ນ ຈົ່ງມີຄວາມ ຈຳເປັນຕ້ອງໄດ້ມີການປັບປຸງກົດ ໝາຍວ່າດ້ວຍຊັບສິນແຫ່ງລັດ ໂດຍອີງໃສ່ກົດໝາຍທີ່ກ່ຽວຂ້ອງ ເປັນຕົ້ນກົດໝາຍວ່າດ້ວຍການ ຄຸ້ມຄອງສ່ວຍສາອາກອນ ສະບັບ ເລກທີ 66/ສພຊ, ລົງວັນທີ 17 ມີຖຸນາ 2019, ກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ ສະບັບ ເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016, ກົດໝາຍວ່າດ້ວຍ ແຮ່ທາດ ສະບັບເລກທີ 31/ສພຊ, ລົງວັນທີ 3 ພະຈິກ 2017, ກົດ ໝາຍວ່າດ້ວຍທີ່ດິນສະບັບເລກ ທີ 70/ສພຊ ລົງວັນທີ 21 ມີຖຸ ນາ 2019, ກົດໝາຍວ່າດ້ວຍປ່າ ໄມ້ສະບັບເລກທີ 64/ສພຊ, ລົງ ວັນທີ 13 ມີຖຸນາ 2019.

ທ່ານຍັງໄດ້ກ່າວຕື່ມວ່າ ກົດໝາຍວ່າດ້ວຍຊັບສິນຂອງລັດ ສະບັບເລກທີ 09/ສພຊ, ລົງວັນ ທີ 12 ຕຸລາ 2002 ເປັນສະບັບ ທຳອິດ, ມາຮອດປີ 2012 ກົດ ໝາຍສະບັບດັ່ງກ່າວ ໄດ້ຮັບການ ປັບປຸງ ໂດຍກອງປະຊຸມສະໄໝ ສາມັນເທື່ອທີ 3 ຂອງສະພາແຫ່ງ ຊາດ ຊຸດທີ VII ເປັນກົດໝາຍ ວ່າດ້ວຍຊັບສິນຂອງລັດສະບັບ ເລກທີ 14/ສພຊ, ລົງວັນທີ 5 ກໍລະກົດ 2012 ຊຶ່ງປະກອບມີ 10 ພາກ 7 ໝວດ 74 ມາດຕາ ແລະ ການປັບປຸງກົດໝາຍວ່າ ດ້ວຍຊັບສິນຂອງລັດບາງມາດ ຕາໃນຄັ້ງນີ້ ມີພາກທີ I ບົດບັນ ຍັດ ແລະ ປັບປຸງມາດຕາ 3 ການ ອະທິບາຍຄຳສັບ ພາກທີ III ການ ຄຸ້ມຄອງ, ການນຳໃຊ້, ການປົກ ປັກຮັກສາການພັດທະນາ ແລະ ການສ້າງຊັບສິນແຫ່ງລັດ ໃນ ມາດຕາ 14 ການຄຸ້ມຄອງຊັບ ສິນຂອງລັດ, ມາດຕາ 22 ການ ຫັນຊັບສິນເປັນທຶນ ມາດຕາ 23 ການແລກປ່ຽນ, ມາດຕາ 26 ການປ່ຽນສິດຄຸ້ມຄອງລັດຖະສົມ ບັດ, ມາດຕາ 28 ການນຳໃຊ້ສາ ທາລະນະສົມບັດ, ມາດຕາ 34 ການຖອນຄືນຊັບສິນແຫ່ງລັດ, ມາດຕາ 37 ການສະສາງຊັບສິນ ແຫ່ງລັດ, ມາດຕາ 42 ແຫລ່ງ ລາຍຮັບຈາກຊັບສິນຂອງລັດ, ມາດຕາ 52 ສິດ ແລະ ໜ້າທີ່ຂອງ ກະຊວງການເງິນ ແລະ ມາດຕາ 53 ສິດ ແລະ ໜ້າທີ່ຂອງພະແນກ ການເງິນ. ຈາກນັ້ນ, ບັນດາຜູ້ເຂົ້າ ຮ່ວມກໍໄດ້ປະກອບຄຳຄິດຄຳເຫັນ ເພື່ອໃຫ້ກົດໝາຍດັ່ງກ່າວ ມີ ຄວາມສັກສິດ, ມີເນື້ອໃນຈະແຈ້ງ ຄົບຖ້ວນ ແລະ ເຂົ້າໃຈງ່າຍ ຮັບ ປະກັນປະສິດທິພາບ ໃນການ ຈັດຕັ້ງປະຕິບັດມາດຕະການປົກ ປ້ອງສິດຜົນປະ�โຫຍດຂອງລັດ, ລວມໝູ່ ແລະ ຜົນປະໂຫຍດອັນ ຊອບທຳຂອງປະຊາຊົນ ປົກປັກ ຮັກສາ ແລະ ພັດທະນາຊັບສິນ ແຫ່ງລັດໃຫ້ມີຄວາມຍືນຍົງ ປະ ກອບສ່ວນສ້າງລາຍຮັບເຂົ້າງົບ ປະມານໃຫ້ຄົບຖ້ວນ.

(ອິນທີ ຂຽວສີຟ້າ)

67 ປີ ແຫ່ງການກຳເນີດເຕີບໃຫຍ່ ແລະ ຂະຫຍາຍຕົວຂອງພັກປະຊາຊົນປະຕິວັດລາວ

ພັກປະຊາຊົນປະຕິວັດລາວ ໄດ້ຮັບການສ້າງຕັ້ງຂຶ້ນໃນວັນທີ 22 ມີນາ 1955 ຢູ່ເຂດທີ່ໝັ້ນການປະຕິວັດແຂວງຫົວພັນ ເຊິ່ງພາຍຫລັງທີ່ໄດ້ສ້າງຕັ້ງພັກແລ້ວ ກໍພໍດີປະເຊີນໜ້າກັບສັດຕູຕົວຮ້າຍກາດ ຕໍ່ສະພາບການດັ່ງກ່າວພັກເຮົາກໍໄດ້ນຳພາກອງທັບປະຊາຊົນລາວ ທີ່ໄດ້ຮັບການສ້າງຕັ້ງຂຶ້ນ ໃນວັນທີ 20 ມັງກອນ 1949 ແລະ ນຳພາປະຊາຊົນລາວບັນດາເຜົ່າໃນທົ່ວປະເທດ ລຸກຮື້ຂຶ້ນຕໍ່ສູ້ຕ້ານກັບຈັກກະພັດລ່າເມືອງຂຶ້ນແບບເກົ່າ ແລະ ແບບໃໝ່ ແລະ ລູກແຫລ້ງຕົນມືຂອງພວກເອົາຢ່າງຕໍ່ເນື່ອງ ແລະ ລຽນຕິດ ຈົນສາມາດຍາດໄດ້ໄຊຊະນະເປັນກ້າວໆມາ ແລະ ໃນທີ່ສຸດກໍສາມາດປົດປ່ອຍປະເທດຊາດ ປະກາດເອກະລາດ ແລະ ສະກຸາປະນາເປັນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຂຶ້ນໃນວັນທີ 2 ທັນວາ 1975.

ການສ້າງຕັ້ງພັກປະຊາຊົນປະຕິວັດລາວ ໃນປີ 1955 ເປັນບາດລ້ຽວອັນສຳຄັນຂອງການປະຕິວັດລາວ ຊາດລາວເປັນຊາດໜຶ່ງທີ່ມີປະຫວັດສາດອັນຍາວນານແຫ່ງການປົກປັກຮັກສາ ແລະ ສ້າງສາຊາດຂອງຕົນ ປະຊາຊົນລາວໄດ້ສືບທອດມູນເຊື້ອ ແລະ ເສີມຂະຫຍາຍຢ່າງຕໍ່ເນື່ອງ ໂດຍສະເພາະແມ່ນການຕໍ່ສູ້ຕີເອົາຊະນະຈັກກະພັດຕ່າງດ້າວຜູ້ຮຸກຮານ ທີ່ມີກຳລັງແຮງລົ້ນລາວເຮົາຕັ້ງຫລາຍເທົ່າໃນທຸກໆດ້ານ.

ປີ 1893 ຝຣັ່ງໄດ້ເອົ້າມາຍຶດຄອງລາວເປັນຫົວເມືອງຂຶ້ນຂອງພວກເອົາ ພວກເອົາໄດ້ກົດຂີ່ຂູດຮີດປະຊາຊົນລາວຢ່າງໜັກໜ່ວງ ແລະ ປ່າເຖື່ອນທັງທາງດ້ານການເມືອງ, ເສດຖະກິດ ແລະ ວັດທະນະທຳ; ຍ້ອນແນວນັ້ນ ປະຊາຊົນລາວບັນດາເຜົ່າໃນທົ່ວດິນແດນລາວແຕ່ເໜືອຮອດໃຕ້ ໄດ້ພາກັນລຸກຮື້ຂຶ້ນຕ້ານແອກປົກຄອງຂອງພວກເອົາຢ່າງອົງອາດກ້າຫານ ແລະ ຕໍ່ເນື່ອງໃນຂອບເຂດທົ່ວປະເທດ ແລະ ໃນເວລານັ້ນ ກໍມີບັນດາບັນພະບຸລຸດລາວຫລາຍທ່ານໄດ້ນຳພາປະຊາຊົນລາວບັນດາເຜົ່າຕໍ່ສູ້ກັບພວກເອົາ ເຊັ່ນ: ອົງແກ້ວ, ອົງກົມມະດຳ, ເຈົ້າຟ້າປັດໄຈ ແລະອື່ນໆ ແຕ່ວ່າຂະບວນການຕໍ່ສູ້ດັ່ງກ່າວພັດບໍ່ໄດ້ຮັບໄຊຊະນະ ຍ້ອນຂາດແນວທາງ ແລະ ການນຳພາທີ່ລວມສູນ ເປັນເອກະພາບ ແຕ່ເຖິງແນວໃດກໍຕາມ ມັນກໍສະແດງໃຫ້ເຫັນເຖິງຄວາມຮັກຊາດອັນດູດດື່ມ ແລະ ຄວາມອົງອາດກ້າຫານຂອງປະຊາຊົນລາວບັນດາເຜົ່າ ໃນການຕໍ່ສູ້ຕ້ານພວກຮຸກຮານຕ່າງດ້າວ; ພ້ອມກັນນັ້ນ, ກໍໄດ້ເປັນບົດຮຽນຫລາຍຢ່າງໃນການຕໍ່ສູ້ໃຫ້ແກ່ພັກ ແລະ ປະຊາຊົນລາວບັນດາເຜົ່າ; ປີ 1930 ປະທານ ໂຮ່ ຈິ ມິງ ນັກຮົບຜູ້ດີເດັ່ນ ແລະ ສະຫລາດສ່ອງໃສຂອງຂະບວນການກອມມຸນິດສາກົນ ໄດ້ສ້າງຕັ້ງພັກກອມມຸນິດອິນດູຈີນຂຶ້ນ ເພື່ອນຳພາຂະບວນການຕໍ່ສູ້ຂອງປະຊາຊົນໄດ້ຂະຫຍາຍຕົວກວ້າງອອກໄປທົ່ວທຸກບ່ອນ; ປີ 1934 ອົງຄະນະພັກແຄ້ນລາວກໍໄດ້ຮັບການສ້າງຕັ້ງຂຶ້ນ ລວມມີສະມາຊິກ 22 ສະຫາຍ ມີໜ່ວຍພັກ 6 ໜ່ວຍ ເພື່ອນຳພາຂະບວນການຕ້ານພວກລ່າເມືອງຂຶ້ນຝຣັ່ງ ພາຍໃຕ້ການນຳພາຂອງພັກ ແລະ ໄດ້ຂະຫຍາຍສະມາຊິກພັກອອກຢ່າງກວ້າງຂວາງ ການຕໍ່ສູ້ນັບມື້ນັບໄດ້ຮັບໄຊຊະນະເປັນກ້າວໆ.

ພ້ອມດຽວກັນນັ້ນ, ກຳລັງປະຕິວັດໄດ້ເຕີບໃຫຍ່ຂະຫຍາຍຕົວໃນຫລາຍດ້ານ ເຊັ່ນ: ກຳລັງປະກອບອາວຸດໄດ້ຮັບການປັບປຸງ, ຖານກຽດຈະການເມືອງໄດ້ຮັບການສ້າງຕັ້ງຂຶ້ນຢູ່ຫລາຍບ່ອນໃນທົ່ວປະເທດ; ວັນທີ 11 ກຸມພາ 1951 ກອງປະຊຸມໃຫຍ່ຄັ້ງທີ 2 ຂອງພັກກອມມຸນິດອິນດູຈີນ ໄດ້ໄຂຂ�ึ້ນຢູ່ຕວຍນກວາງ (ຫວຽດນາມ) ແລະ ໃນວັນທີ 11 ມີນາ 1951 ກອງປະຊຸມພັກພັນທະພາບ ລາວ-ຫວຽດນາມ ໄດ້ໄຂຂຶ້ນຢູ່ຫວຽດບັກ (ຫວຽດນາມ), ປີ 1955 ຕໍ່ໜ້າຄວາມຮຽກຮ້ອງຕ້ອງການອັນໃໝ່ຂອງການປະຕິວັດ ແລະ ໂດຍປະຕິບັດຕາມມະຕິກອງປະຊຸມໃຫຍ່ຄັ້ງທີ 2 ຂອງພັກກອມມຸນິດອິນດູຈີນ ພາຍຫລັງກະກຽມມາໄດ້ໄລຍະໜຶ່ງ ພັກກອມມຸນິດລາວກໍໄດ້ເປີດກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ແລະ ສ້າງຕັ້ງພັກປະຊາຊົນປະຕິວັດລາວຂຶ້ນ ກອງປະຊຸມໄດ້ດຳເນີນແຕ່ວັນທີ 22 ມີນາ ເຖິງວັນທີ 6 ເມສາ 1955 ຢູ່ເຂດທີ່ໝັ້ນແຂວງຫົວພັນ ກອງປະຊຸມຄັ້ງນີ້ມີຜູ້ແທນສົມບູນເອົ້າຮ່ວມ 20 ສະຫາຍ ໄດ້ຕາງໜ້າໃຫ້ສະມາຊິກເກືອບ 400 ສະຫາຍ ໃນທົ່ວປະເທດ ກອງປະຊຸມຄັ້ງນີ້ໄດ້ເລືອກຕັ້ງເອົາສະຫາຍ ໄກສອນ ພົມວິຫານ ເປັນເລຂາທິການໃຫຍ່;

ພາຍຫລັງສ້າງຕັ້ງພັກປະຊາຊົນປະຕິວັດລາວຂຶ້ນມາແລ້ວ ໂດຍພາຍໃຕ້ການຊີ້ນຳ-ນຳພາຂອງພັກຢ່າງສະຫລາດສ່ອງໃສ ກອງທັບ ແລະ ປະຊາຊົນລາວ ສາມາດຕີເອົາຊະນະການບຸກໂຈມຕີບຮຸດຍຶດຂອງສັດຕູທັງໝົດ ເປັນຕົ້ນປີ 1968 ຍັນຮົບນ້ຳບາກຜາກີ່, ປີ 1970 ຍັນຮົບທົ່ງໄຫຫີນຊຮຽງຂວາງ, ປີ 1971 ຍັນຮົບລາມເຊີນ 719 ແລະ ຍັນຮົບນ້ອຍໃຫຍ່ອື່ນໆ ພວກເຮົາໄດ້ທັບມ້າງຍຸດທະສາດສົງຄາມພິເສດຂອງທິດສະດີຈອນເຊີນ ແລະ ຍຸດທະສາດສົງຄາມພິເສດ ເພີ່ມທະວີຕາມທິດສະດີນິກເຊີນ ຂອງຈັກກະພັດອາເມລິກາກຶກປະລາໄຊຢ່າງໜັກໜ່ວງຢູ່ລາວ, ພາກໃຕ້ຫວຽດນາມ ແລະ ກຳປູເຈຍ; ມາໃນໄລຍະນີ້, ເຂດປົດປ່ອຍໄດ້ເປີດກວ້າງອອກກວມເອົາເນື້ອທີ່ 4 ສ່ວນ 5 ຂອງດິນແດນທົ່ວປະເທດ.

ໃນເດືອນເມສາ ປີ 1975 ການຕໍ່ສູ້ຂອງປະຊາຊົນສອງປະເທດອ້າຍນ້ອງ ໄດ້ຮັບໄຊຊະນະຢ່າງໃຫຍ່ຫລວງ ຄື: ວັນທີ 17 ເມສາ 1975 ແນວໂຮມເອກະລາດກຳປູເຈຍສາມາດປົດປ່ອຍພະນົມເປັນ ແລະ ສາມາດປົດປ່ອຍປະເທດ, ກອງທັບ ແລະ ປະຊາຊົນຫວຽດນາມ ໄດ້ປົດປ່ອຍພາກໃຕ້ ໃນວັນທີ 30 ເມສາ 1975; ໃນເວລາດຽວກັນນັ້ນ, ຢູ່ລາວເຮົາມີເງື່ອນໄຂອຳນວຍຄວາມສະດວກ ທີ່ມີລັກສະນະເປັນປັດໄຈໂດຍກົງໃຫ້ແກ່ການປະຕິວັດລາວ ໂດຍກຳແໜ້ນເອົາກາລະໂອກາດພັນປີມີເທື່ອໜຶ່ງ ພັກເຮົາໄດ້ຕົກລົງລຸກຮື້ຂຶ້ນຍຶດອຳນາດໃນຕົ້ນເດືອນພຶດສະພາ 1975 ດ້ວຍສາມຂາຄ້ອນຍຸດທະສາດ ຄື: ການລຸກຮື້ຂຶ້ນຂອງປະຊາຊົນ, ການໜູນໜີບຂອງກຳລັງປະກອບອາວຸດປະຕິວັດ ແລະ ການລຸກຮື້ຂຶ້ນແຍກຕົວຂອງທະຫານສັດຕູສົມທົບກັບການຕໍ່ສູ້ທາງດ້ານກົດໝາຍ ພັກເຮົາເສີມຂະຫຍາຍກຳລັງແຮງທັງໝົດທັງສາມຢ່າງສຸດຂີດຕໍ່ສູ້ຢ່າງເດັດດ່ຽວ ບຸກໂຈມຕີສັດຕູຢ່າງຕໍ່ເນື່ອງລຽນຕິດ ຈາກຫລາຍທິດດ້ວຍຫລາຍປະເພດກຳລັງ ໃນທີ່ສຸດມາເຖິງທ້າຍເດືອນສິງຫາ 1975 ໄດ້ປະກາດລົບລ້າງອຳນາດການປົກຄອງເກົ່າທັງໝົດ ແລະ ສ້າງຕັ້ງອຳນາດການປົກຄອງປະຕິວັດຂຶ້ນແທນໃນຂອບເຂດທົ່ວປະເທດ ໃນວັນທີ 2 ທັນວາ 1975 ກອງປະຊຸມໃຫຍ່ຜູ້ແທນປະຊາຊົນທົ່ວປະເທດ ໄດ້ໄຂຂຶ້ນຢູ່ນະຄອນຫລວງວຽງຈັນ ໄດ້ເປັນເອກະພາບກັນຜ່ານມະຕິອັນເປັນປະຫວັດສາດ ຄື: ລົບລ້າງລະບອບລາຊາທິປະໄຕຢ່າງສິ້ນເຊີງ ແລະ ສະກຸາປະນາ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຂຶ້ນ, ສ້າງຕັ້ງສະພາປະຊາຊົນສູງສຸດ, ແຕ່ງຕັ້ງປະທານປະເທດ, ສ້າງຕັ້ງລັດກະບານ ສປປລາວ, ກຳນົດທຸງຊາດ, ເພງຊາດ ແລະ ພາສາທາງລັດກະການ.

ດ້ວຍໄຊຊະນະອັນເປັນປະຫວັດສາດດັ່ງກ່າວນັ້ນ ໄດ້ເປັນອີດໝາຍແຫ່ງການເຮັດສຳເລັດການປະຕິວັດຊາດ-ປະຊາທິປະໄຕຢ່າງສົມບູນ ແລະ ໄດ້ໄຂສັງກາດໃໝ່ແຫ່ງການສ້າງສາປະເທດຊາດໃຫ້ຈະເລີນຮຸ່ງເຮືອງ ປະຊາຊົນລາວບັນດາເຜົ່າໄດ້ເປັນເຈົ້າຂອງປະເທດຊາດ ແລະ ເປັນເຈົ້າຊະຕາກຳຂອງຕົນຢ່າງແທ້ຈິງ.

ນັບແຕ່ປີ 1975 ເປັນຕົ້ນມາ ສປປລາວ ໄດ້ກ້າວຂຶ້ນສູ່ໄລຍະໃໝ່ຂອງການປະຕິວັດ, ພັກປະຊາຊົນປະຕິວັດລາວ ໄດ້ກາຍເປັນພັກກຳອຳນາດ ເຊິ່ງມີລັດປະຊາທິປະໄຕປະຊາຊົນເປັນເຄື່ອງມືອັນແຂງແກ່ນຄົມ ເພື່ອຄຸ້ມຄອງລັດຄຸ້ມຄອງສັງຄົມ ທີ່ຕັ້ງ ແລະ ພາລະບົດບາດຂອງພັກຄື: ພັກຍັງເປັນກອງນຳໜ້າທາງດ້ານການເມືອງຂອງຊົນຊັ້ນກຳມະກອນ, ທັງເປັນຜູ້ນຳພາສັງຄົມ ຄວາມຮັບຜິດຊອບຂອງພັກແມ່ນສູງຂຶ້ນກວ່າເກົ່າ ພັກມີຄວາມຮັບຜິດຊອບຕໍ່ຊະຕາກຳຂອງຊາດຢ່າງຮອບດ້ານ ນັບແຕ່ມື້ສ້າງຕັ້ງພັກ ວັນທີ 22 ມີນາ 1955 ມາຮອດວັນທີ 22 ມີນາ 2022 ກໍພໍດີພັກມີອາຍຸຄົບຮອບ 67 ປີ ຍ້ອນມີພັກເປັນແກນນຳ ໄດ້ນຳພາກອງທັບ ແລະ ປະຊາຊົນຕໍ່ສູ້ກັບຈັກກະພັກຜູ້ຮຸກຮານຈົນໄດ້ຮັບໄຊຊະນະ; ປັດຈຸບັນປະເທດຊາດໄດ້ຮັບການພັດທະນາຫລາຍດ້ານ ສັງຄົມມີຄວາມສະຫງົບສຸກ ຊີວິດການເປັນຢູ່ຂອງປະຊາຊົນນັບມື້ນັບດີຂຶ້ນ.

ສຸຂະສະບາຍຫາຍໂລຄາ

5 ວິທີຖະໜອມສາຍຕາ

ໂດຍ: ຫົວກະທີ

ປັດຈຸບັນ, ຄົນສ່ວນຫລາຍຈະຈົດຈ່ໍຢູ່ກັບຄອມພິວເຕີ້, ແທັບເລັດ, ໃຊ້ໂທລະສັບສະມາດໂฟນ, ປຶ້ມບັນທຶກ... ຈຶ່ງກໍ່ໃຫ້ເກີດບັນຫາກ່ຽວກັບຕາ ເຊັ່ນ: ເຈັບຕາ, ຕາມົວ, ຕາແຫ້ງ, ຕາໂປ ລວມທັງອາການເຈັບຫົວ, ເຈັບຫລັງ, ເຈັບຄໍ, ເຈັບບ່າ ແລະອື່ນໆ ເພື່ອຫລີກລ່ຽງບັນຫາຕ່າງໆທີ່ກ່າວມານັ້ນ ໃນຄໍລຳສຸບາຍຫາຍໂລຄາສະບັບນີ້ ເຮົາມີວິທີຖະໜອມສາຍຕາມານຳສະເໜີແກ່ທ່ານ ເຊິ່ງມີຂັ້ນຕອນດັ່ງຕໍ່ໄປນີ້:

1. ຫລັບຕາເລື້ອຍໆ ເພື່ອຫລຸດຜ່ອນອາການຕາແຫ້ງ ຫລື ໃຊ້ນ້ຳຕາທຽມຢອດໃສ່ຕາ ເພື່ອຊ່ວຍເພີ່ມຄວາມຊຸ່ມຊື່ນໃຫ້ແກ່ໜ່ວຍຕາ.

2. ຈັດວາງຄອມພິວເຕີ້ໃຫ້ເໝາະສົມ ໂດຍໃຫ້ມີແສງສະຫວ່າງທີ່ພຽງພໍ ເພື່ອຈະຊ່ວຍຫລຸດການສະທ້ອນໃນໜ້າຈໍ; ພ້ອມນັ້ນ, ຕ້ອງຕັ້ງລະດັບຈໍພາບຈາກຈຸດສູນກາງຂອງຈໍໃຫ້ຢູ່ຕ່ຳກວ່າລະດັບສາຍຕາ ປະມານ 4-9 ນິ້ວ ຫລື ຕ່ຳກວ່າລະດັບສາຍຕາ ແລະ ໜ້າຈໍກໍບໍ່ຄວນສູງເກີນໄປ ຫລື ຕ່ຳເກີນໄປ.

3. ເລືອກໃຊ້ຕົວອັກສອນຂະໜາດໃຫຍ່ໃນເວລາພິມເອກກະສານຕ່າງໆ ແລະ ປັບຄວາມເຂັ້ມຂອງຕົວອັກສອນໃຫ້ເຂັ້ມຂຶ້ນ.

4. ເລືອກແວ່ນຕາທີ່ເໝາະສົມກັບຄອມພິວເຕີ ທີ່ຜະລິດຂຶ້ນເພື່ອກັ່ນຕອງແສງຈາກໜ້າຈໍໂດຍສະເພາະ ແລະໃຊ້ເລນສີຂຽວອ່ອນ ເພື່ອຊ່ວຍຜ່ອນຄາຍສາຍຕາ ແລະ ຍັງຫລຸດແສງສະທ້ອນຈາກຈໍອີກດ້ວຍ.

5. ພັກຜ່ອນສາຍຕາທຸກໆຊົ່ວໂມງ ໂດຍການປ່ຽນທ່າທາງ ຫລື ລຸກຂຶ້ນ ບິດໂຕໄປ-ມາ ເພື່ອພັກຜ່ອນສາຍຕາ ແລະ ປ້ອງກັນອາການປວດເມື່ອຍຈາກການໃຊ້ຄອມພິວເຕີເປັນເວລາດົນ.

ຂໍ້ມູນ: www.nationtv.tv

ໃຕ້ຮົ່ມພັກ

ອານິງເດດ ສົງດາລັກ

* ຕົ້ນໄມ້ມີຮາກເຫງົ້າ
ຈຶ່ງເປັນລຳກົມງາມ
ຂຽວກະຈີຕາມຕົ້ນ
ນານວັນຍິ່ງສູງໃຫຍ່ຂຶ້ນ

* ຕົ້ນໄມ້ເປັນບ່ອນຊຶ້ນ
ສາລິກາໂບຍບິນ
ຄົນໄປ-ມາເຊົາຊຶ້ນ
ໃຜກໍແພງຮັກເຈົ້າ

* ຮົ່ມໄມ້ປຸນປຽບໄດ້
ອົດທົນນຳພາທາງ
ຄອຍດູແລປະຊາເຊື້ອ
ເປັນດັ່ງເງົາຄູ່ຂ້າງ

* ນັບແຕ່ວັນກໍ່ຕັ້ງ
ປະເທດລາວມີໄຊ
ເມືອງລາວໃນວັນນີ້
ຫ່າງໄກຄຳວ່າດ້ອຍ

* ພ້ອມທັງເຮືອງຮຸ່ງແຈ້ງ
ຍ້ອນວ່າມີການນຳພາ
ລາວຈຶ່ງສົດໃສແຈ້ງ
ເປັນດັ່ງດາວຢູ່ຟ້າ

* ຂໍຈຳຈາລຶກໄວ້
ຂໍສືບສານແນວທາງ
ເຝິກໃຫ້ຕົນຮຽນຮູ້
ໃຕ້ຮົ່ມທຸງກ່ຽວຄ້ອນ

ຊີຢັ່ງລົງດິນ
ດອກບານໃບດົ້ວ
ສາຂາກ້ານກິ່ງ
ເປັນໂພກວ້າງຮົ່ມເຢັນ ງາມເດ!

ອາໄສຮົ່ມເງົາເຢັນ
ເຈີດແຊວສຽງຮ້ອງ
ບັນເທົາຄວາມເມື່ອຍ
ລຳຕົ້ນສະຫງ່າງາມ ໂພເອີຍ!

ເໝືອນພັກປະຊາຊົນ
ເບິ່ງແຍງຊູຊວ້ານ
ປວງຊົນລາວບັນດາເຜົ່າ
ປະດັບເອ້ຮ່າງຄົງ ຊອບແລ້ວ!

ມີພັກນຳພາ
ພັດທະນາໄກກ້າວ
ມີຄວາມແຕກຕ່າງ
ພັດທະນາກ້າວກວ່າຫລັງ ທ່ານເອີຍ!

ແສງສ່ອງປະກາຍສີ
ພັກພາເດີນກ້າວ
ເຮືອງຮອງໂດດເດັ່ນ
ໃສເຫລື້ອມເປັ່ງປະກາຍ

ບຸນຄຸນພັກປະຊາຊົນລາວ
ວາດວາງແນໄວ້
ເດີນຕາມທາງພັກ
ໜັກແໜ້ນແກ່ນແຂງ ທ່ານເອີຍ!

ກົດໝາຍວ່າດ້ວຍການຟື້ນຟູ ແລະ ການລົ້ມລະລາຍຂອງວິສາຫະກິດ (ສະບັບປັບປຸງ)

ຕໍ່ຈາກສະບັບກ່ອນ...

ມາດຕາ 59 (ໃໝ່) ການຮ້ອງຂໍຟື້ນຟູວິສາຫະກິດຂະໜາດນ້ອຍ ແລະ ຈຸນລະວິສາຫະກິດ

ວິສາຫະກິດຂະໜາດນ້ອຍ ຫຼື ຈຸນລະວິສາຫະກິດ ທີ່ຢູ່ໃນສະພາວະລົ້ມລະລາຍ ຫຼື ໃກ້ຈະຢູ່ໃນສະ ພາວະລົ້ມລະລາຍ ສາມາດຍື່ນຄຳຮ້ອງຂໍຕໍ່ສານທີ່ມີສິດອຳນາດ ເພື່ອພິຈາລະນາການຟື້ນຟູວິສາຫະກິດຕົນ.

ວິສາຫະກິດຂະໜາດນ້ອຍ ຫຼື ຈຸນລະວິສາຫະກິດ ທີ່ຖືກຮ້ອງຟ້ອງໃຫ້ລົ້ມລະລາຍ ຕາມທີ່ໄດ້ກຳ ນົດໄວ້ໃນມາດຕາ 10 ຂອງກົດໝາຍສະບັບນີ້ ກໍສາ ມາດຮ້ອງຂໍໃຫ້ສານພິຈາລະນາການຟື້ນຟູວິສາຫະກິດຕົນໄດ້.

ມາດຕາ 60 (ໃໝ່) ສຳນວນຄຳຮ້ອງຂໍ

ສຳນວນຄຳຮ້ອງຂໍຟື້ນຟູວິສາຫະກິດຂະໜາດນ້ອຍ ແລະ ຈຸນລະວິສາ ຫະກິດ ປະກອບດ້ວຍ:

1. ຄຳຮ້ອງຂໍ ຕາມແບບຟອມທີ່ສານກຳນົດ;
2. ເອກະສານຢັ້ງຢືນການເປັນວິສາຫະກິດຂະໜາດນ້ອຍ ຫຼື ຈຸນລະວິ ສາຫະກິດ;
3. ໜັງສືຊີ້ແຈງຊັບສິນ ແລະ ໜີ້ສິນ ທີ່ມີເນື້ອໃນ ຕາມທີ່ໄດ້ກຳນົດໄວ້ ໃນມາດຕາ 9 ຂໍ້ 3 ຂອງກົດໝາຍສະບັບນີ້;
4. ເອກະສານອື່ນທີ່ກ່ຽວຂ້ອງ.

ມາດຕາ 61 (ໃໝ່) ການກວດກາສຳນວນຄຳຮ້ອງຂໍ

ເມື່ອໄດ້ຮັບສຳນວນຄຳຮ້ອງຂໍແລ້ວ ຈ່າສານ ຕ້ອງກວດກາເບິ່ງສຳນວນ ຄຳຮ້ອງຂໍດັ່ງກ່າວ ວ່າມີເນື້ອໃນ ແລະ ເອກະສານ ຖືກຕ້ອງ ແລະ ຄົບຖ້ວນ ຕາມ ທີ່ໄດ້ກຳນົດໄວ້ໃນມາດຕາ 60 ຂອງກົດໝາຍສະບັບນີ້ ຫຼື ບໍ່, ຖ້າເຫັນວ່າສຳ ນວນຮ້ອງຂໍດັ່ງກ່າວ ຫາກຄົບຖ້ວນ ແລະ ຖືກຕ້ອງແລ້ວ ຈ່າສານ ຈຶ່ງຮັບຄຳຮ້ອງ ຂໍ ແລ້ວປະກອບສຳນວນຄະດີ ພ້ອມທັງຂຶ້ນຟ້ອງຄະດີ ພາຍໃນເວລາ ສາມວັນ ລັດຖະການ. ໃນກໍລະນີທີ່ສຳນວນຄຳຮ້ອງຂໍ ຫາກບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນ ຈ່າ ສານ ຕ້ອງສົ່ງສຳນວນດັ່ງກ່າວຄືນໃຫ້ຜູ້ຮ້ອງຂໍ ພ້ອມທັງແນະນຳໃຫ້ຜູ້ກ່ຽວແກ້ ໄຂຂໍ້ບົກພ່ອງ.

ມາດຕາ 62 (ໃໝ່) ການມອບສຳນວນຄະດີໃຫ້ຜູ້ພິພາກສາ

ພາຍຫຼັງໄດ້ຮັບສຳນວນຄະດີແລ້ວ ປະທານສານທີ່ມີສິດອຳນາດ ຕ້ອງ ມອບຄະດີດັ່ງກ່າວ ໃຫ້ຫົວໜ້າຄະນະສານການຄ້າ ເພື່ອມອບໝາຍໃຫ້ຜູ້ພິພາກ ສາໃດໜຶ່ງຮັບຜິດຊອບຄົ້ນຄວ້າ ພາຍໃນເວລາ ສາມວັນລັດຖະການ ນັບແຕ່ວັນ ໄດ້ຮັບສຳນວນຄະດີເປັນຕົ້ນໄປ.

ໃນກໍລະນີທີ່ມີການຮ້ອງຟ້ອງລົ້ມລະລາຍ ຜູ້ພິພາກສາທີ່ຖືກມອບໝາຍ ໃຫ້ຄົ້ນຄວ້າຄະດີລົ້ມລະລາຍນັ້ນ ຈະເປັນຜູ້ຮັບຜິດຊອບກ່ຽວກັບການຟື້ນຟູວິສາ ຫະກິດຂະໜາດນ້ອຍ ແລະ ຈຸນລະວິສາຫະກິດ.

ມາດຕາ 63 (ໃໝ່) ການຄົ້ນຄວ້າສຳນວນຄະດີ ແລະ ການເປີດການພິຈາລະນາ ຄະດີຟື້ນຟູ

ຜູ້ພິພາກສາທີ່ຖືກມອບໝາຍ ຕ້ອງຮັບຜິດຊອບຄົ້ນຄວ້າສຳນວນຄະດີ, ກວດກາເງື່ອນໄຂຂອງວິສາ ຫະກິດລູກໜີ້ ພາຍໃນເວລາ ຫ້າວັນລັດຖະການ ນັບແຕ່ວັນໄດ້ຮັບມອບໝາຍ ຖ້າມີເງື່ອນໄຂຖືກຕ້ອງແລ້ວ ສານຕ້ອງພິຈາລະນາ ອອກຄຳສັ່ງເປີດການພິຈາລະນາຄະດີຟື້ນຟູວິສາຫະກິດຂະໜາດນ້ອຍ ແລະ ຈຸນ ລະວິສາຫະກິດ ພ້ອມທັງສະເໜີແຕ່ງຕັ້ງຜູ້ຄວບຄຸມຊັບສິນ ຕາມທີ່ໄດ້ກຳນົດໄວ້ ໃນມາດຕາ 19 ຂອງກົດໝາຍສະບັບນີ້.

ຄຳສັ່ງເປີດການພິຈາລະນາຄະດີຟື້ນຟູວິສາຫະກິດຂະໜາດນ້ອຍ ແລະ ຈຸນລະວິສາຫະກິດ ເປັນຄຳສັ່ງທີ່ໃຊ້ໄດ້ຢ່າງເດັດຂາດ.

ມາດຕາ 64 (ໃໝ່) ການແຈ້ງ ແລະ ປະກາດຄຳສັ່ງເປີດການພິຈາລະນາຄະດີ ຟື້ນຟູ

ພາຍຫຼັງມີຄຳສັ່ງເປີດການພິຈາລະນາຄະດີຟື້ນຟູວິສາຫະກິດຂະໜາດ ນ້ອຍ ແລະ ຈຸນລະວິສາຫະກິດແລ້ວ, ພາຍໃນເວລາ ສາມວັນລັດຖະການສານ ຕ້ອງແຈ້ງຄຳສັ່ງດັ່ງກ່າວ ໃຫ້ເຈົ້າໜີ້ຕາມບັນຊີລາຍຊື່ໃນໜັງສືຊີ້ແຈງຊັບສິນ ແລະ ໜີ້ສິນ ແລະ ປະກາດໃຫ້ເຈົ້າໜີ້ອື່ນ ແລະ ສັງຄົມ ຜ່ານພາຫະນະສື່ມວນຊົນ ຢ່າງ ໜ້ອຍ ຫ້າວັນ ຕິດຕໍ່ກັນ ເພື່ອຊາບກ່ຽວກັບການເປີດການພິຈາລະນາຄະດີຟື້ນຟູ ດັ່ງກ່າວ.

ສຳລັບເຈົ້າໜີ້ ທີ່ຍັງບໍ່ທັນມີໃນບັນຊີລາຍຊື່ໃນໜັງສືຊີ້ແຈງຊັບສິນ ແລະ ໜີ້ສິນນັ້ນ ໃຫ້ແຈ້ງຕໍ່ຜູ້ຄວບຄຸມຊັບສິນ ຫຼື ສານ ພາຍໃນເວລາ ສາມສິບວັນ ນັບ ແຕ່ວັນທີ່ສານ ໄດ້ແຈ້ງ ຫຼື ປະກາດເປັນຕົ້ນໄປ.

ມາດຕາ 65 (ໃໝ່) ການຢຸດການດຳເນີນການທາງດ້ານກົດໝາຍ ແລະ ການ ໂຈະການຊຳລະ

ພາຍຫຼັງມີຄຳສັ່ງເປີດການພິຈາລະນາຄະດີຟື້ນຟູວິສາຫະກິດຂະໜາດ ນ້ອຍ ແລະ ຈຸນລະວິສາຫະກິດແລ້ວ, ເຈົ້າໜີ້ ຕ້ອງຢຸດການດຳເນີນການທາງ ດ້ານກົດໝາຍ ຕໍ່ວິສາຫະກິດລູກໜີ້ ຫຼື ຊັບສິນຂອງວິສາຫະກິດລູກໜີ້. ເຈົ້າໜີ້ ທີ່ມີການຄ້ຳປະກັນ ແລະ ເຈົ້າໜີ້ທີ່ບໍ່ມີການຄ້ຳປະກັນ ຕ້ອງບໍ່ຮ້ອງຟ້ອງ, ທວງໜີ້, ເຂົ້າຄອບຄອງ, ຍຶດ ຫຼື ກະທຳອື່ນ ໂດຍບໍ່ໄດ້ຮັບອະນຸຍາດຈາກສານ.

ການຊຳລະຕົ້ນທຶນ ໃຫ້ເຈົ້າໜີ້ ແລະ ການຊຳລະດອກເບ້ຍ ໃຫ້ເຈົ້າໜີ້ ທີ່ບໍ່ມີການຄ້ຳປະກັນ ໂດຍວິສາຫະກິດລູກໜີ້ ຈະຖືກໂຈະນັບແຕ່ວັນມີຄຳສັ່ງເປີດ ການພິຈາລະນາຄະດີຟື້ນຟູເປັນຕົ້ນໄປ. ສ່ວນການຊຳລະດອກເບ້ຍ ໃຫ້ເຈົ້າໜີ້ທີ່ ມີການຄ້ຳປະກັນ ສືບຕໍ່ຈົນກວ່າມູນຄ່າການຊຳລະຈະຄົບມູນຄ່າຂອງຊັບຄ້ຳປະກັນ.

ມາດຕາ 66 (ໃໝ່) ເອກະສານທີ່ຕ້ອງສະເໜີກ່ຽວກັບການຟື້ນຟູວິສາຫະກິດຂະ ໜາດນ້ອຍ ແລະ ຈຸນລະວິສາຫະກິດ

ວິສາຫະກິດລູກໜີ້ ຕ້ອງກະກຽມ ແລະ ສ້າງເອກະສານ ເພື່ອສະເໜີຕໍ່ ສານ ພາຍໃນເວລາ ສາມສິບວັນ ນັບແຕ່ວັນມີຄຳສັ່ງເປີດການພິຈາລະນາຄະດີ ຟື້ນຟູເປັນຕົ້ນໄປ.

ເອກະສານທີ່ຕ້ອງສະເໜີກ່ຽວກັບການຟື້ນຟູ ມີ ດັ່ງນີ້:

1. ຂໍ້ສະເໜີແກ້ໄຂໜີ້ສິນ;
2. ໜັງສືຊີ້ແຈງຊັບສິນ ແລະ ໜີ້ສິນ;
3. ເອກະສານຕົກລົງເຫັນດີ ກ່ຽວກັບຂໍ້ສະເໜີແກ້ໄຂໜີ້ສິນ ຈາກເຈົ້າ ໜີ້ທີ່ມີການຄ້ຳປະກັນ ຫຼື ຖ້າບໍ່ເຫັນດີ ກໍໃຫ້ມີເອກະສານຢັ້ງຢືນ ພ້ອມດ້ວຍເຫດ ຜົນ ແລະ ຂໍ້ສະເໜີ;
4. ບົດລາຍງານຂອງຜູ້ຄວບຄຸມຊັບສິນ;
5. ເອກະສານອື່ນ ຕາມການແນະນຳຂອງຜູ້ຄວບຄຸມຊັບສິນ.

ໃນກໍລະນີວິສາຫະກິດລູກໜີ້ ຫາກບໍ່ສາມາດຍື່ນເອກະສານຕໍ່ສານ ພາຍ ໃນເວລາດັ່ງກ່າວ ໂດຍມີເຫດຜົນພຽງພໍ ກໍສາມາດຮ້ອງຂໍຕໍ່ສານ ເພື່ອພິຈາລະນາ ຕໍ່ກຳນົດເວລາດັ່ງກ່າວອີກ ສາມສິບວັນ ແຕ່ສູງສຸດບໍ່ໃຫ້ເກີນ ຫົກສິບວັນ.

ມາດຕາ 67 (ໃໝ່) ການພິຈາລະນາຂໍ້ສະເໜີການແກ້ໄຂໜີ້ສິນ

ພາຍຫຼັງໄດ້ຮັບຂໍ້ສະເໜີແກ້ໄຂໜີ້ສິນ ແລະ ເອກະສານ ຕາມທີ່ໄດ້ກຳ ນົດໄວ້ໃນມາດຕາ 66 ຂອງກົດໝາຍສະບັບນີ້ ຜູ້ພິພາກສາທີ່ຖືກມອບໝາຍ ຕ້ອງຄົ້ນຄວ້າ ແລະ ພິຈາລະນາຕົກລົງ ພາຍໃນເວລາ ຫ້າວັນລັດຖະການ ຖ້າວ່າ:

1. ບົດລາຍງານຂອງຜູ້ຄວບຄຸມຊັບສິນ ຫາກສະແດງໃຫ້ເຫັນວ່າ:
- ວິສາຫະກິດລູກໜີ້ ມີຄວາມໜ້າເຊື່ອຖື;
- ຂໍ້ສະເໜີຊຳລະໜີ້ສິນນັ້ນ ເຈົ້າໜີ້ແຕ່ລະຄົນ ຈະໄດ້ຮັບ ຢ່າງໜ້ອຍ ບໍ່ ຫຼຸດການຊຳລະໜີ້ສິນທີ່ຈະໄດ້ຮັບ ໃນຂະບວນການລົ້ມລະລາຍ;
- ຂໍ້ສະເໜີແກ້ໄຂໜີ້ສິນ ມີເຫດມີຜົນ ແລະ ຍຸຕິທຳ;
- ຂໍ້ສະເໜີແກ້ໄຂໜີ້ສິນ ສາມາດປະຕິບັດໃຫ້ສຳເລັດໄດ້.

2. ເຈົ້າໜີ້ທີ່ມີການຄ້ຳປະກັນທຸກຄົນ ຕົກລົງເຫັນດີ ຫຼື ຂໍ້ສະເໜີແກ້ໄຂ ໜີ້ສິນ ໄດ້ໃຫ້ການປົກປ້ອງເຈົ້າໜີ້ທີ່ມີການຄ້ຳປະກັນທີ່ບໍ່ເຫັນດີ.

ມາດຕາ 68 (ໃໝ່) ການແຈ້ງຂໍ້ສະເໜີແກ້ໄຂໜີ້ສິນໃຫ້ເຈົ້າໜີ້

ພາຍຫຼັງຂໍ້ສະເໜີແກ້ໄຂໜີ້ສິນໄດ້ຮັບການເຫັນດີຈາກຜູ້ພິພາກສາແລ້ວ, ສານ ຕ້ອງແຈ້ງໃຫ້ເຈົ້າໜີ້ທຸກຄົນ ພ້ອມທັງສຳເນົາຂໍ້ສະເໜີແກ້ໄຂໜີ້ສິນ ແລະ ເອກະສານທີ່ກ່ຽວຂ້ອງໃຫ້ເຈົ້າໜີ້ດັ່ງກ່າວ.

ມາດຕາ 69 (ໃໝ່) ການພິຈາລະນາຂໍ້ສະເໜີແກ້ໄຂໜີ້ສິນໂດຍກອງປະຊຸມ ເຈົ້າໜີ້

ຜູ້ຄວບຄຸມຊັບສິນ ຕ້ອງຮຽກເປີດກອງປະຊຸມເຈົ້າໜີ້ ເພື່ອພິຈາລະນາຂໍ້ ສະເໜີແກ້ໄຂໜີ້ສິນ ພາຍໃນເວລາ ສິບວັນ ນັບແຕ່ວັນຂໍ້ສະເໜີແກ້ໄຂໜີ້ສິນໄດ້ ຮັບການເຫັນດີຈາກຜູ້ພິພາກສາເປັນຕົ້ນໄປ.

ໃນກອງປະຊຸມເຈົ້າໜີ້ ມີແຕ່ເຈົ້າໜີ້ທີ່ບໍ່ມີການຄ້ຳປະກັນເທົ່ານັ້ນ ມີສິດ ລົງຄະແນນສຽງ ສ່ວນເຈົ້າໜີ້ທີ່ມີການຄ້ຳປະກັນນັ້ນ ມີສິດລົງຄະແນນສຽງ ສະ ເພາະແຕ່ສ່ວນໜີ້ສິນຂອງຕົນທີ່ບໍ່ໄດ້ມີການຄ້ຳປະກັນເທົ່ານັ້ນ.

ຂໍ້ສະເໜີແກ້ໄຂໜີ້ສິນ ຈະໄດ້ຮັບການຮັບຮອງໂດຍກອງປະຊຸມເຈົ້າໜີ້ ກໍຕໍ່ເມື່ອໄດ້ຮັບຄະແນນສຽງສ່ວນຫຼາຍຂອງເຈົ້າໜີ້ທີ່ມີສິດລົງຄະແນນສຽງ ຫຼື ຕົວແທນ ທີ່ເຂົ້າຮ່ວມກອງປະຊຸມ ແລະ ມີມູນຄ່າໜີ້ສິນ ກວມເອົາສອງສ່ວນ ສາມຂອງຈຳນວນໜີ້ສິນທີ່ບໍ່ມີການຄ້ຳປະກັນທັງໝົດ.

ເຈົ້າໜີ້ທີ່ບໍ່ມີການຄ້ຳປະກັນທຸກຄົນ ຈະລົງຄະແນນສຽງເປັນກຸ່ມດຽວ ກັນ. ໃນກໍລະນີຜົນປະ�โຫຍດຂອງເຈົ້າໜີ້ທີ່ບໍ່ມີການຄ້ຳປະກັນ ຫາກແຍກເປັນ ຫຼາຍປະເດັນທີ່ແຕກຕ່າງກັນ ຕາມການກຳນົດຂອງຜູ້ຄວບຄຸມຊັບສິນ, ການລົງ ຄະແນນສຽງຂອງເຈົ້າໜີ້ທີ່ບໍ່ມີການຄ້ຳປະກັນ ກໍໃຫ້ແຍກເປັນກຸ່ມຕາມແຕ່ລະ ປະເດັນ ແລະ ລົງມະຕິຮັບຮອງແຕ່ລະປະເດັນ.

ໃນກໍລະນີກອງປະຊຸມເຈົ້າໜີ້ ຫາກມີມະຕິຮັບຮອງ ຫຼື ບໍ່ຮັບຮອງຂໍ້ສະ ເໜີແກ້ໄຂໜີ້ສິນ, ປະທານກອງປະຊຸມ ຕ້ອງສະເໜີມະຕິ ພ້ອມດ້ວຍຂໍ້ສະເໜີ ແກ້ໄຂໜີ້ສິນທີ່ຖືກຮັບຮອງ ຫຼື ບໍ່ຖືກຮັບຮອງໃຫ້ສານ ພາຍໃນເວລາ ສາມວັນ ລັດຖະການ ນັບແຕ່ວັນປິດກອງປະຊຸມເຈົ້າໜີ້ເປັນຕົ້ນໄປ.

ມາດຕາ 70 (ໃໝ່) ການຮັບຮອງຜົນຂອງກອງປະຊຸມເຈົ້າໜີ້ໂດຍສານ

ໃນກໍລະນີກອງປະຊຸມເຈົ້າໜີ້ ຫາກມີມະຕິຮັບຮອງຂໍ້ສະເໜີແກ້ໄຂໜີ້ ສິນ ແລະ ບໍ່ມີການຮ້ອງຂໍຄັດຄ້ານແລ້ວ, ສານ ຕ້ອງພິຈາລະນາຮັບຮອງຂໍ້ສະເໜີ ແກ້ໄຂໜີ້ສິນດັ່ງກ່າວ ພ້ອມທັງອອກຄຳສັ່ງຈັດຕັ້ງປະຕິບັດຂໍ້ສະເໜີແກ້ໄຂໜີ້ສິນ ນັ້ນ ຊຶ່ງມີຜົນບັງຄັບຕໍ່ເຈົ້າໜີ້ທຸກຄົນ.

ເຈົ້າໜີ້ທີ່ບໍ່ມີການຄ້ຳປະກັນ ທີ່ໄດ້ລົງຄະແນນສຽງບໍ່ຮັບຮອງຂໍ້ສະເໜີ ແກ້ໄຂໜີ້ສິນ ສາມາດຍື່ນຄຳຮ້ອງຂໍຄັດຄ້ານມະຕິຮັບຮອງຂໍ້ສະເໜີແກ້ໄຂໜີ້ສິນ ຕໍ່ສານ ພາຍໃນເວລາ ສາມວັນລັດຖະການ ນັບແຕ່ວັນປິດກອງປະຊຸມ ຊຶ່ງສານ ຕ້ອງພິຈາລະນາແກ້ໄຂໂດຍໄວ. ເຈົ້າໜີ້ທີ່ບໍ່ເຂົ້າຮ່ວມກອງປະຊຸມ ບໍ່ມີສິດຄັດ ຄ້ານມະຕິຮັບຮອງຂໍ້ສະເໜີແກ້ໄຂໜີ້ສິນ.

ໃນກໍລະນີຂໍ້ສະເໜີແກ້ໄຂໜີ້ສິນແລ້ວ, ຫາກບໍ່ໄດ້ຮັບຮອງໃນກອງປະ ຊຸມເຈົ້າໜີ້ ກໍໃຫ້ສານພິຈາ ລະນານຳເອົາການຕົກລົງແກ້ໄຂໜີ້ສິນ ໄປສູ່ການດຳ ເນີນຄະດີລົ້ມລະລາຍ.

ມາດຕາ 71 (ໃໝ່) ການຈັດຕັ້ງປະຕິບັດຂໍ້ສະເໜີແກ້ໄຂໜີ້ສິນ

ພາຍຫຼັງມີຄຳສັ່ງຈັດຕັ້ງປະຕິບັດຂໍ້ສະເໜີແກ້ໄຂໜີ້ສິນ ວິສາຫະກິດລູກ ໜີ້ ຕ້ອງຈັດຕັ້ງປະຕິບັດຂໍ້ສະ ເໜີແກ້ໄຂໜີ້ສິນທັນທີ.

ຜູ້ຄວບຄຸມຊັບສິນ ມີຄວາມຮັບຜິດຊອບໃນການເຂົ້າຄວບຄຸມຊັບສິນ ທີ່ເປັນເປົ້າໝາຍ, ຄຸ້ມຄອງ, ຊື້ຂາດ ແລະ ແບ່ງປັນຊັບສິນຂອງວິສາຫະກິດລູກ ໜີ້ ຕາມຂໍ້ສະເໜີແກ້ໄຂໜີ້ສິນທີ່ຖືກຮັບຮອງ.

ຜູ້ຄວບຄຸມຊັບສິນ ຕ້ອງຊຸກຍູ້, ຕິດຕາມວິສາຫະກິດລູກໜີ້ໃນການຈັດ ຕັ້ງປະຕິບັດຂໍ້ສະເໜີແກ້ໄຂໜີ້ສິນ ພ້ອມທັງລາຍງານການຈັດຕັ້ງປະຕິບັດໃຫ້ ສານ ຢ່າງເປັນປົກກະຕິ.

ມາດຕາ 72 (ໃໝ່) ໄລຍະເວລາຈັດຕັ້ງປະຕິບັດຂໍ້ສະເໜີແກ້ໄຂໜີ້ສິນ

ໄລຍະເວລາຈັດຕັ້ງປະຕິບັດຂໍ້ສະເໜີແກ້ໄຂໜີ້ສິນ ໃຫ້ປະຕິບັດຕາມກຳ ນົດເວລາທີ່ໄດ້ກຳນົດໄວ້ໃນຂໍ້ສະເໜີແກ້ໄຂໜີ້ສິນ ທີ່ຖືກຮັບຮອງໂດຍສານ ແຕ່ ບໍ່ໃຫ້ເກີນ ສອງປີ ໂດຍໃຫ້ເລີ່ມແຕ່ວັນທີ່ສານອອກຄຳສັ່ງຈັດຕັ້ງປະຕິບັດຂໍ້ສະ ເໜີແກ້ໄຂໜີ້ສິນເປັນຕົ້ນໄປ.

ມາດຕາ 73 (ໃໝ່) ການດັດແກ້ຂໍ້ສະເໜີແກ້ໄຂໜີ້ສິນ

ພາຍຫຼັງຈັດຕັ້ງປະຕິບັດຂໍ້ສະເໜີແກ້ໄຂໜີ້ສິນແລ້ວ, ຖ້າວິສາຫະກິດລູກ ໜີ້ ຫຼື ຜູ້ຄວບຄຸມຊັບສິນ ຫາກເຫັນວ່າມີຄວາມຈຳເປັນຕ້ອງໄດ້ດັດແກ້ເນື້ອໃນ ຂອງຂໍ້ສະເໜີດັ່ງກ່າວ ກໍໃຫ້ສະເໜີຕໍ່ສານເພື່ອພິຈາລະນາ.

ສານ ຈະພິຈາລະນາໃຫ້ດັດແກ້ຂໍ້ສະເໜີແກ້ໄຂໜີ້ສິນ ກໍຕໍ່ເມື່ອ:

1. ມີບົດລາຍງານທີ່ກຳນົດຄວາມຈຳເປັນໃນການດັດແກ້ເນື້ອໃນຂອງ ຂໍ້ສະເໜີ;
2. ໄດ້ຮັບການເຫັນດີໃຫ້ດັດແກ້ເນື້ອໃນຂອງຂໍ້ສະເໜີ ດ້ວຍຄະແນນ ສຽງສ່ວນຫຼາຍໃນກອງປະ ຊຸມເຈົ້າໜີ້.

ມາດຕາ 74 (ໃໝ່) ການຍົກເລີກຂໍ້ສະເໜີແກ້ໄຂໜີ້ສິນ

ຂໍ້ສະເໜີແກ້ໄຂໜີ້ສິນ ສາມາດຖືກຍົກເລີກໃນເວລາໃດກໍໄດ້ ບົນພື້ນ ຖານການສະເໜີຂອງຜູ້ຄວບຄຸມຊັບສິນ, ເຈົ້າໜີ້ ຫຼື ວິສາຫະກິດລູກໜີ້ ຕາມກຳ ລະນີ ດັ່ງນີ້:

1. ຂໍ້ມູນທີ່ກຳນົດໃນໜັງສືຊີ້ແຈງຊັບສິນ ແລະ ໜີ້ສິນ ບໍ່ຖືກຕ້ອງຕາມ ຄວາມເປັນຈິງ ແລະ ຂໍ້ສະເໜີແກ້ໄຂໜີ້ສິນ ອາດບໍ່ຖືກຮັບຮອງ ຖ້າເຈົ້າໜີ້ ຮູ້ຂໍ້ ມູນດັ່ງກ່າວ;
2. ວິສາຫະກິດລູກໜີ້ ບໍ່ປະຕິບັດຕາມເງື່ອນໄຂຂອງຂໍ້ສະເໜີແກ້ໄຂ ໜີ້ສິນ;

ອ່ານຕໍ່ສະບັບໜ້າ...

ເຂົ້າໃຈຄຳສັບ ກົດໝາຍ

ຄັດໂດຍ: ກົງທະນູຄຳ

ກົດໝາຍວ່າດ້ວຍເຕັກໂນໂລຊີລະດັບສູງ

4. ເຕັກໂນໂລຊີ ການສື່ສານ ຂໍ້ມູນ ຂ່າວສານ ໝາຍເຖິງ ເຕັກໂນ ໂລຊີທີ່ຮັບໃຊ້ໃນການສ້າງຂໍ້ມູນຂ່າວສານ ເປັນລະບົບເອເລັກໂຕຣນິກ, ການ ຄຳນວນ, ການຈັດລຽງລຳດັບ, ການເກັບຮັກສາ ແລະ ການແລກປ່ຽນຂໍ້ມູນ ຂ່າວສານ ຜ່ານເຄືອຂ່າຍການສື່ສານ ເປັນຕົ້ນ ຄອມພິວເຕີ, ໂທລະສັບ, ອຸ ປະກອນການສື່ສານ, ອຸປະກອນກະຈາຍສຽງ, ໂທລະພາບ, ເຄືອຂ່າຍ ແລະ ອຸປະກອນເອເລັກໂຕຣນິກອື່ນ ລວມທັງການບໍລິການຕ່າງໆທີ່ກ່ຽວຂ້ອງ;

5. ເຕັກໂນໂລຊີ ຊີວະພາບ ໝາຍເຖິງ ການນຳໃຊ້ຄວາມຮູ້ ດ້ານວິທະຍາສາດ ກ່ຽວກັບລະບົບຊີ ວະວິທະຍາ ຫຼື ສ່ວນປະກອບຂອງ ສິ່ງທີ່ມີຊີວິດ ເພື່ອນຳມາສ້າງ ຫຼື ປ່ຽນແປງ ຜະລິດຕະພັນ ແລະ ຂະບວນ ການປຸງແຕ່ງສະເພາະໃດໜຶ່ງ;

ອ່ານຕໍ່ສະບັບໜ້າ

ເລືອກຕັ້ງເອົາຜູ້ນຳຕີມໍ ຕ້ອງຕັດສິນຮອບທີ 2

ນາກ ເມືອງມະໂນ

ຜົນການນັບຄະແນນສຽງການເລືອກຕັ້ງປະທານາທິບໍດີຕີມໍ-ເລດສະເຕ ໃນວັນທີ 19 ມີນານີ້ ຜູ້ຕາງໜ້າສະພາແຫ່ງຊາດເພື່ອການຟື້ນຟູຂອງຕີມໍ ໄດ້ຄະແນນສູງສຸດ ແຕ່ຍັງບໍ່ມີຜູ້ສະໝັກຮັບເລືອກຕັ້ງທ່ານໃດຈາກ 16 ທ່ານ ທີ່ລົງສະໝັກຮັບເລືອກຕັ້ງ ໄດ້ຄະແນນການຂັ້ນຕ່ຳສຸດ 50%, ເຮັດໃຫ້ຕ້ອງມີການເລືອກຕັ້ງຄືນໃໝ່ຮອບຊິ້ຂາດ ໃນເດືອນເມສາ ລະຫວ່າງທ່ານ ຣາມອສ-ຮໍຕາ ອະດີດປະທານາທິບໍດີ ແລະ ທ່ານ ຟຣານຊິສໂກ ລູ ໂອໂລ ກູເຕີເຣສ ປະທານາທິບໍດີຕີມໍ ຄົນປັດຈຸບັນ.

ອີງຕາມການລາຍງານຂ່າວໃນວັນທີ 21 ມີນາ 2022 ໃຫ້ຮູ້ວ່າ: ຫລັງຈາກນັບຄະແນນສຽງການເລືອກຕັ້ງປະທານາທິບໍດີຕີມໍ-ເລດສະເຕ ປີ 2022 ໄດ້ສິ້ນສຸດລົງໃນຄືນວັນຈັນຜ່ານມານີ້ ປາກົດວ່າ: ທ່ານ ຣາມອສ-ຮໍຕາ ອະດີດປະທານາທິບໍດີ ແຕ່ປີ 2007-2012 ເຊິ່ງເປັນຜູ້ຕາງໜ້າສະພາແຫ່ງຊາດເພື່ອການຟື້ນຟູຂອງຕີມໍ ໄດ້ຮັບ 46,58%, ອັນດັບທີ 2 ແມ່ນທ່ານ ຟຣານຊິສໂກ ລູ ໂອໂລ ກູເຕີເຣສ ປະທານນາທິບໍດີຕີມໍຄົນປັດຈຸບັນ ເຊິ່ງເປັນຜູ້ຕາງໜ້າຂອງພັກເຟຣເຕລິນ ໄດ້ 22,35%, ແລະ ອັນດັບທີ 3 ແມ່ນທ່ານ ນາງ ອາແມນດາ ເບີຕາ ດອສຊານໂຕສ ຮອງນາຍົກລັດຖະມົນຕີອັນດັບທີ 1 ຈາກພັກຄຸນໂຕ ໄດ້ 9,41%.

ເກືອບ 2 ທົດສະວັດຫລັງຈາກແຍກຕົວເອກະລາດຈາກອິນໂดເນເຊຍ, ຕີມໍ-ເລດສະເຕ ໄດ້ຈັດການເລືອກຕັ້ງປະທານາທິບໍດີເປັນຄັ້ງທີ 5 ໃນວັນທີ 19 ມີນາຜ່ານມາ, ຜູ້ເຂົ້າຊິງຕຳແໜ່ງທັງໝົດ 16 ທ່ານ ລ້ວນແຕ່ເປັນບຸກຄົນສຳຄັນ ທີ່ໄດ້ມີສ່ວນຮ່ວມໃນການຕໍ່ສູ້ເພື່ອເອກະລາດຂອງປະເທດ.

ຕາມລະບຽບການ, ເມື່ອບໍ່ມີຜູ້ສະໝັກທ່ານໃດ ໄດ້ຮັບຄະແນນຫລາຍກວ່າ 50% ຂອງຄະແນນສຽງທັງໝົດ, ການເລືອກຕັ້ງຮອບທີສອງເປັນຮອບຊິ້ຂາດ ຈະຈັດຂຶ້ນໃນວັນທີ 19 ເມສາ 2022 ລະຫວ່າງຜູ້ຊະນະອັນດັບທີ 1 ແລະ 2 ໃນຮອບທຳອິດ.

ແຫລ່ງຂ່າວ: Daily News

ລັດຖະມົນຕີມາເລເຊຍ ຮຽກຮ້ອງໃຫ້ ລັດຖະສະພາຊຸກຍູ້ຫລຽນດິຈິຕອນ

ນາງ ປາກາລັກ ພົມມີໄຊ

ລັດຖະມົນຕີມາເລເຊຍ ຮຽກຮ້ອງໃຫ້ລັດຖະສະພາ ຊຸກຍູ້ຫລຽນດິຈິຕອນ-ບິດຄອຍ ໃຫ້ເປັນສະກຸນເງິນທີ່ຖືກຕ້ອງຕາມກົດໝາຍໃນປະເທດມາເລເຊຍ ກວມເອົາການລົງທຶນດິຈິຕອນໃນອຸດສາຫະກຳເຕັກໂນໂລຢີ.

ອີງຕາມການລາຍງານຂ່າວ ເມື່ອວັນທີ 22 ມີນາຜ່ານມາ ໃຫ້ຮູ້ວ່າ: ທ່ານ ຊາຮິດີ ໄຊນູ ອາບິດິນ ຮອງລັດຖະມົນຕີກະຊວງສື່ສານ ແລະ ສື່ມວນຊົນຂອງມາເລເຊຍ ໄດ້ກ່າວໃນລັດຖະສະພາໃນວັນຈັນນີ້ວ່າ: "ພວກເຮົາຫວັງວ່າລັດຖະບານ (ມາເລເຊຍ) ຈະອະນຸຍາດໃຫ້ນຳໃຊ້ບິດຄອຍ ແລະ ຫລຽນດິຈິຕອນອື່ນໆ ກາຍເປັນສະກຸນເງິນທີ່ຖືກຕ້ອງຕາມກົດໝາຍຂອງປະເທດ".

ທັງນີ້, ກະຊວງສື່ສານ ແລະ ສື່ມວນຊົນຂອງມາເລເຊຍ ແມ່ນກະຊວງທີ່ເບິ່ງແຍງດ້ານດິຈິຕອນໃນປະເທດ, ມີຂອບເຂດວຽກງານໃນດ້ານຕ່າງໆ ນັບຕັ້ງແຕ່ການເປີດຕົວເຄືອຂ່າຍມືຖື 5G ຈົນເຖິງການເບິ່ງແຍງການລົງທຶນໃນອຸດສາຫະກຳເຕັກໂນໂລຢີຕ່າງໆ.

ແຫລ່ງຂ່າວ: The Standard

ສະເໜີດັດແກ້ກົດໝາຍໃຫ້ມີການບັນຈຸຫລຽນດິຈິຕອນ

ທະນາກອນ ປັນນະວົງ

ສະຖາບັນການເງິນສາກົນ ຂອງດູໄບ ໄດ້ເປີດເຜີຍວ່າ: ຈະເລີ່ມມີການສະເໜີກົດໝາຍສະກຸນເງິນດິຈິຕອນຄອບຄຸມທົ່ວປະເທດ.

ເຈົ້າໜ້າທີ່ບໍລິການດ້ານການເງິນຂອງດູໄບ ກ່າວວ່າ: ໃນປັດຈຸບັນອົງການດັ່ງກ່າວ ກຳລັງສະເໜີໃຫ້ມີການຮ່າງກົດໝາຍໃຫ້ສາມາດສະໜອງການບໍລິການທາງດ້ານການເງິນທີ່ກ່ຽວຂ້ອງກັບຫລຽນດິຈິຕອນ ເຊິ່ງໄດ້ປຶກສາຫາລືກັນເປັນຢ່າງດີແລ້ວ ແລະ ຫວັງວ່າຈະເຫັນວິທີທີ່ເໝາະສົມໃນການຮ່າງກົດໝາຍ.

ສະຖາບັນດັ່ງກ່າວ ຍັງໃຫ້ຮູ້ຕື່ມວ່າ: ຖ້າວ່າການປັບປຸງກົດໝາຍໄດ້ສຳເລັດແລ້ວ ບົດລາຍງານນີ້ຈະຖືກເຜີຍແຜ່ຢູ່ໃນເວັບໄຊ, ໃນທາງກົງກັນຂ້າມ ໜ່ວຍງານຄວບຄຸມເບິ່ງແຍງເລີ່ມມີຄວາມເຫັນບໍ່ເຫັນດີ ບັນຫານີ້ບໍ່ຄວນຖືກຍົກຂຶ້ນມາຈົນກວ່າຈະມີການປ່ຽນແປງຢ່າງຈະແຈ້ງ.

ໃນຂະນະດຽວກັນ, ສະຖາບັນດັ່ງກ່າວ ໄດ້ສະເໜີການລົງທຶນໃນສະກຸນເງິນດິຈິຕອນເທົ່ານັ້ນ ສອດຄ່ອງກັບທີ່ສະຖາບັນໄດ້ກ່າວວ່າ ການລົງທຶນໃນສະກຸນເງິນດິຈິຕອນຈະຕ້ອງຖືກກຳນົດຖານະເປັນຊັບສິນທີ່ປອດໄພ ເຊິ່ງໃນເອກະສານທີ່ມີການເຜີຍແຜ່ຫລ້າສຸດ ໄດ້ມີການແຍກສະກຸນເງິນດິຈິຕອນອອກມາ ໂດຍແຕ່ລະຫລຽນ ຈະຖືກກຳນົດແຕກຕ່າງກັນ ເຊິ່ງໃນປັດຈຸບັນຫລາຍໆຫລຽນ ມີການປະຍຸກໃຊ້ໃນທາງທີ່ແຕກຕ່າງກັນ.

ແຫລ່ງຂ່າວ: https://cryptosiam.com/

ບໍ່ໄດ້ຮັບຫນັງສືພິມໂທ: +856 (21) 454563, ຕ້ອງການແຈ້ງຂ່າວໂທ: +856 (21) 413522
ອອກແບບ-ຈັດຫນ້າໂດຍ: ນາງ ກຸກກິກ ບຸດດາໄຊ ແລະ ສົມນຶກ ແກ້ວໄຊຍະຈັກ